

PLAN INTERNATIONAL

# ເຄື່ອງມື ການປູກຈິດສຳນຶກ ກ່ຽວກັບ ຄົນພິການ

## DISABILITY AWARENESS TOOLKIT



# ເຄື່ອງມື ການປູກຈິດສຳນຶກ ກ່ຽວກັບ ຄົນພິການ

## ສັງລວມຄຳຖາມສົນທະນາ ແລະ ຮູບພາບປະກອບ

PLAN INTERNATIONAL

# 1. ຄຳຖາມກ່ຽວກັບຄວາມພິການ ແລະ ຮູບພາບປະກອບ

- ✓ ສຳລັບທ່ານແລ້ວ ຄຳວ່າ ຄວາມພິການ ໝາຍເຖິງຫຍັງ?
- ✓ ທ່ານຮູ້ບໍ່ວ່າໃນບ້ານ ຫຼື ຄອບຄົວຂອງທ່ານ ມີໃຜແດ່ ທີ່ພິການ?
- ✓ ຖ້າມີ, ພວກເຂົາເຫຼົ່ານັ້ນ ພິການຫຍັງ ຕາມທີ່ທ່ານສັງເກດເຫັນ?
- ✓ ມີຄວາມພິການໃດແດ່ທີ່ທ່ານຮູ້ ທີ່ຍັງບໍ່ທັນໄດ້ກ່າວເຖິງ?



# 1. ຄຳຖາມກ່ຽວກັບຄວາມພິການ ແລະ ຮູບພາບປະກອບ

















# 2. ຄຳຖາມກ່ຽວກັບທັດສະນະຄະຕິ ແລະ ຄວາມເຊື່ອທີ່ບໍ່ດີພ້ອມຮູບພາບປະກອບ

✓ ທັດສະນະຄະຕິອັນໃດທີ່ຄົນສ່ວນໃຫຍ່ໃນບ້ານຂອງທ່ານມີຕໍ່ ເດັກ ແລະ ຜູ້ໃຫຍ່ທີ່ມີຄວາມພິການ?
✓ ເປັນຫຍັງຄົນໃນບ້ານທ່ານຈຶ່ງມີທັດສະນະຄະຕິແນວນັ້ນຕໍ່ກັບຄົນທີ່ມີຄວາມພິການ?
✓ ທ່ານຄິດວ່າ ແນວຄວາມຄິດ ແລະ ຄວາມເຊື່ອເຫຼົ່ານັ້ນ ມາຈາກໃສ?
✓ ພໍ່ແມ່ ປະຕິບັດຕໍ່ລູກທີ່ມີຄວາມພິການແນວໃດ?
✓ ຖ້າພໍ່ແມ່ບໍ່ໃຫ້ເດັກທີ່ມີຄວາມພິການເຂົ້າໂຮງຮຽນ ມັນຈະມີຜົນກະທົບແນວໃດ?












# 2. ຄຳຖາມກ່ຽວກັບທັດສະນະຄະຕິ ແລະ ຄວາມເຊື່ອທີ່ບໍ່ດີພ້ອມຮູບພາບປະກອບ









ການນຳທາງ (ຈູງ) ແລະ ຊ່ວຍເຫຼືອຄົນທີ່ມີຄວາມພິການເຫັນວ່າເປັນການສ້າງຄວາມດີຕາມຄວາມເປັນຈິງແລ້ວ ບາງຄັ້ງເດັກທີ່ມີພໍ່ແມ່ພິການ ກໍ່ຖືກປະຕິເສດໃນການເຂົ້າເຖິງການສຶກສາ ຫຼື ການຊ່ວຍເຫຼືອຢ່າງເຕັມຮູບແບບແກ່ພໍ່ແມ່ຂອງເຂົາເຈົ້າ









ຮູບປະກອບທັງ 4 ຮູບນີ້ ສະແດງໃຫ້ເຫັນວັດທະນະທຳຄວາມເຊື່ອ ແລະ ທັດສະນະຄະຕິດ້ານລົບສາມາດເຫັນໄດ້ຈາກທັງ ຊາຍ, ຍິງ ແລະ ເດັກ. ທ່ານສາມາດຍົກໃຫ້ຊາວບ້ານໄດ້ຮັບຮູ້ວ່າຄວາມເຊື່ອເຫຼົ່ານີ້ສາມາດເຫັນໄດ້ໃນທຸກຍຸກ ທຸກສະໄໝ ແລະ ທຸກເພດໄວ.

# 3. ຄຳຖາມກ່ຽວກັບທັດສະນະຄະຕິ ແລະ ຄວາມເຊື່ອ ດ້ານບວກ ພ້ອມຮູບ

✓ ຈົ່ງຍົກຕົວຢ່າງທັດສະນະຄະຕິ ແລະ ຄວາມເຊື່ອ ດ້ານບວກຕໍ່ ກັບຄົນທີ່ມີຄວາມພິການ?
✓ ການບໍລິການໃດແດ່ທີ່ທ່ານຄິດວ່າສາມາດເອົາເດັກ ແລະ ຜູ້ໃຫຍ່ ທີ່ມີຄວາມພິການເຂົ້າຮ່ວມໄດ້?
✓ ວຽກງານໃນສັງຄົມໃດແດ່ທີ່ເດັກທີ່ມີຄວາມພິການສາມາດເຂົ້າຮ່ວມໄດ້?














# 3. ຄຳຖາມກ່ຽວກັບທັດສະນະຄະຕິ ແລະ ຄວາມເຊື່ອ ດ້ານບວກ ພ້ອມຮູບ















# 4. ຄຳຖາມກ່ຽວກັບ ຄວາມຊຳນານ ແລະ ວິຊາອາຊີບ

**ກິດຈະກຳໃດແດ່ທີ່ເດັກ ແລະ ຜູ້ໃຫຍ່ທີ່ມີຄວາມພິການສາມາດເຂົ້າຮ່ວມໄດ້, ກິດຈະກຳເຫຼົ່ານັ້ນອາດກ່ຽວຂ້ອງກັບ:**

- ✓ **ກິດຈະກຳທາງສັງຄົມ (ເຂົ້າຮ່ວມການສະຫຼອງ ແລະ ບຸນຕ່າງໆ ທີ່ຈັດໂດຍຄອບຄົວ ຫຼື ບ້ານ)**
- ✓ **ກິດຈະກຳເສດຖະກິດ (ເຮັດວຽກເພື່ອຫາເງິນ)**
- ✓ **ກິດຈະກຳປົກຄອງ (ການຕັດສິນໃຈໃນຊຸມຊົນ)**










# 4. ຄຳຖາມກ່ຽວກັບ ຄວາມທັກສະ ແລະ ວິຊາອາຊີບ























ຈຸດປະສົງແມ່ນເພື່ອສຸມໃສ່ການສ້າງລາຍຮັບດ້ວຍວິທີທີ່ຖືກຕ້ອງເໝາະສົມ. ເຖິງຢ່າງໃດກໍຕາມ, ການຂໍທານຍັງເປັນວິທີໜຶ່ງໃນການສ້າງລາຍຮັບ. ຖ້າມີຜູ້ເຂົ້າຮ່ວມກ່າວເຖິງການຂໍທານ, ໃຫ້ອະທິບາຍວ່າ ນັ້ນເປັນຕົວຢ່າງທີ່ບໍ່ດີ.

## 5. ຄຳຖາມກ່ຽວກັບເຄື່ອງຄ້ຳຊູ ແລະ ຮູບພາບປະກອບ

✓ ທ່ານຮູ້ຈັກເຄື່ອງຄ້ຳຊູທີ່ສາມາດຊ່ວຍຄົນທີ່ມີຄວາມພິການ ທີ່ເປັນເດັກ ແລະ ຜູ້ໃຫຍ່ ອັນໃດແດ່ ເພື່ອໃຫ້ເຂົາເຈົ້າສາມາດດຳລົງຊີວິດໄດ້ຢ່າງເປັນອິດສະຫຼະ?











# 5. ຄຳຖາມກ່ຽວກັບເຄື່ອງຄ້ຳຊູ ແລະ ຮູບພາບປະກອບ









# ວິທີການສະແດງຮູບພາບປະກອບ



ຄວາມບົກຜ່ອງທາງຮ່າງກາຍ

IMPAIRMENTS

# ຄົນຕາບອດ

# PERSON WHO IS BLIND



© Plan International

# ຄວາມບົກຜ່ອງດ້ານການເບິ່ງເຫັນ ແລະ ຕາບອດ
## BLINDNESS AND VISUAL IMPAIRMENT

## ສາເຫດ

ຄົນຜູ້ໜຶ່ງສາມາດ ເບິ່ງບໍ່ເຫັນ/ຕາບອດ ສ່ວນໃດສ່ວນໜຶ່ງ ຫຼື ທັງໝົດ ຕັ້ງແຕ່ຕອນເກີດ ຫຼື ພາຍຫຼັງການເກີດ, ເຊິ່ງສາມາດເກີດຈາກຫຼາກຫຼາຍສາເຫດ, ແຕ່ສາເຫດທີ່ມັກເກີດແມ່ນ:

> ເດັກນ້ອຍທີ່ມີຄວາມບົກຜ່ອງດ້ານການເບິ່ງເຫັນແມ່ນ ມັກເກີດຈາກ ໂພສະນາການທີ່ບໍ່ດີ ຫຼື ການຕິດເຊື້ອ

> ຝີ ໃນຕາ (Trachoma) ເຊິ່ງມີສາເຫດມາຈາກການແຜ່ເຊື້ອຂອງ ແມ່ພະຍາດ ໂດຍແມງວັນ ຫຼື ການສຳພັດ.

> ໂລກຕາບອດແຖບແມ່ນ້ຳ (River Blindness) ແມ່ນການແຜ່ກະຈາຍຂອງ ແມ່ພະຍາດ ໂດຍແມງວັນດຳ

> ພະຍາດໝາກແດງ (Measles)

> ສະໝອງໄດ້ຮັບ ການເສຍຫາຍໃນໄລຍະກ່ອນ, ລະຫວ່າງ ຫຼື ຫຼັງການເກີດ

> ການບາດເຈັບຢູ່ຕາເນື່ອງຈາກອຸບັດຕິເຫດ

> ແກ່ນຕາຂຸ້ນ - ຕໍ້ກະຈົກ (Cataracts), ເຊິ່ງອາດມີມາແຕ່ກຳເນີດ ຫຼື ເນື່ອງມາຈາກນ້ຳ ຫຼື ອາຫານທີ່ປົນເປື້ອນ

> ຕໍ້ຫີນ (Glaucoma)

> ກຳມະພັນ

> ສູງອາຍຸ

## ອາການ

> ຕາບອດແມ່ນອາການທີ່ບໍ່ສາມາດເບິ່ງເຫັນສິ່ງໃດໄດ້. ບາງຄົນມີຄວາມບົກຜ່ອງ ດ້ານການເບິ່ງເຫັນ (ຕາບອດບາງສ່ວນ) ເຊິ່ງພວກເຂົາຈະເບິ່ງເຫັນສິ່ງຕ່າງໆຢ່າງຈຳກັດ ເຊັ່ນ: ເຫັນເປັນພາບມົວຫຼືບໍ່ສາມາດຈຳ ແນກຮູບຮ່າງຂອງ ວັດຖຸໄດ້.

> ຄົນເຮົາ ສາມາດຕາບອດໝົດສອງຂ້າງ ຫຼື ຕາທັງສອງຂ້າງ ຫຼື ຂ້າງດຽວທີ່ບອດເປັນບາງສ່ວນ.

## ການສະໜັບສະໜູນ

> ບາງສາເຫດກໍສາມາດປິ່ນປົວ ຫຼື ຜ່າຕັດໄດ້ ເຊັ່ນ: ການຜ່າຕັດແກ່ນ ຕາຂຸ້ນ-ຕໍ້ກະຈົກ (cataract)

> ການໃສ່ແວ່ນສາຍຕາກໍສາມາດຊ່ວຍໃຫ້ຄົນທີ່ມີບັນຫາດ້ານການເບິ່ງເຫັນ ສາມາດເຫັນຈະແຈ້ງຂຶ້ນໄດ້

> ຄົນທີ່ມີຄວາມບົກຜ່ອງທາງສາຍຕາ ຄວນໄດ້ຮັບການສະໜັບສະໜູນ ເພື່ອໃຫ້ພວກເຂົາເຈົ້າສາມາດດຳລົງຊີວິດໄດ້ຢ່າງອິດສະຫຼະ, ເຊັ່ນ: ການຮຽນຍ່າງ ໂດຍໃຊ້ໄມ້ນຳທາງ.

ຄວາມບົກຜ່ອງທາງຮ່າງກາຍ

IMPAIRMENTS

# ຄົນຫູໜວກ

# PERSON WHO IS DEAF



© Plan International

# ຄວາມບົກຜ່ອງດ້ານການໄດ້ຍິນ - ຫູໜວກ

## DEAFNESS AND HEARING IMPAIRMENT

## ສາເຫດ

ຄົນຜູ້ໜຶ່ງສາມາດຫູໜວກສ່ວນໃດສ່ວນໜຶ່ງ ຫຼື ທັງໝົດຕັ້ງແຕ່ຕອນເກີດ ຫຼື ພາຍຫຼັງການເກີດ, ເຊິ່ງສາມາດເກີດຈາກຫຼາກຫຼາຍສາເຫດ, ແຕ່ສາເຫດທີ່ມັກ ເກີດແມ່ນ:

- ກຳມະພັນ
- ການເກີດກ່ອນກຳນົດ
- ການຂາດທາດໄອໂອດິນ ໃນລະຫວ່າງຖືພາ
- ແມ່ມານນຳໃຊ້ ຢາ ຫຼື ຢາປົວພະຍາດໃນລະຫວ່າງຖືພາ
- ຫູຕິດເຊື້ອ (ຫຼັງຈາກເກີດ)
- ເຫຍື່ອຫຸ້ມສະໝອງອັກເສບ (ຫຼັງຈາກເກີດ)
- ສູງອາຍຸ
- ການຄວັດຫູດ້ວຍວັດຖຸທີ່ແຫຼມ-ມີຄົມ

## ອາການ

- ບໍ່ຕອບສະໜອງຕໍ່ກັບສຽງທີ່ຢູ່ອ້ອມຂ້າງ ຫຼື ສຽງເອີ້ນ
- ງ່ຽງຫົວໄປທາງດ້ານໃດດ້ານໜຶ່ງ ຫຼື ເອົາມືຄອບຫູໄວ້

## ການສະໜັບສະໜູນ

- ຜູ້ຊ່ຽວຊານທົດສອບການໄດ້ຍິນ
- ເຄື່ອງຊ່ວຍຟັງອາດສາມາດຊ່ວຍໄດ້
- ໃຊ້ພາສາມື ຫຼື ໃຊ້ນິ້ວມືສະກົດຄຳ ເພື່ອ ສື່ສານກັນ
- ການກວດຫາສາເຫດຂອງໃນການບໍ່ໄດ້ຍິນ ຕັ້ງແຕ່ຕົ້ນ ແມ່ນ ເປັນສິ່ງສຳຄັນ ເພື່ອທີ່ຈະໄດ້ຫາຫົນທາງການປິ່ນປົວທີ່ເປັນໄປໄດ້ ແລະ ການຮຽນຮູ້ ເພື່ອໃຫ້ສາມາດສື່ສານໄດ້.

## ຂໍ້ມູນທີ່ສຳຄັນ

ມີເດັກນ້ອຍຈຳນວນຫຼາຍທີ່ມີບັນຫາດ້ານການໄດ້ຍິນ ແຕ່ບໍ່ເຄີຍໄດ້ຮັບການທົດສອບມາກ່ອນ, ດັ່ງນັ້ນພວກເຂົາຈຶ່ງ ມັກຖືກເຂົ້າໃຈຜິດວ່າມີຄວາມບົກຜ່ອງທາງການຮຽນຮູ້. ດັ່ງນັ້ນເດັກນ້ອຍທີ່ມີຄວາມບົກຜ່ອງໃນການຮຽນຮູ້ຄວນໄດ້ຮັບການທົດສອບຄວາມສາມາດໃນການໄດ້ຍິນ ເພື່ອຫຼີກ ເວັ້ນບັນຫານີ້.

# ຄົນຫຼັງໂກ່ງ /ຫຼັງຂ້ອມ

## PERSON WITH A HUNCHBACK



© Plan International

# ຫຼັງໂກ່ງ/ຫຼັງຂ້ອມ
## HUNCHBACK

## ສາເຫດ

> ຫຼັງໂກ່ງ/ຫຼັງຂ້ອມ (Kyphosis) (ຫຼັງທີ່ເລີ່ມໂກ່ງ-ຂ້ອມລົງ) ພົບໄດ້ໃນເດັກນ້ອຍ ຫຼື ໄວໜຸ່ມ ເນື່ອງຈາກຄວາມຜິດປົກກະຕິຂອງກະດູກສັນຫຼັງ ຫຼື ການບິບອັດກະດູກສັນຫຼັງ ຜ່ານໄລຍະເວລາດົນນານ.

> ອາດເປັນຜົນຈາກ ກ້າມຊີ້ນຂອງຫຼັງອ່ອນແອ ຫຼື ຈາກທ່າທາງທີ່ບໍ່ຖືກຕ້ອງ, ມັກເກີດໃນກຸ່ມໄວໜຸ່ມ

> ຂໍ້ບົກຜ່ອງໃນເວລາເກີດ - ຖ້າກະດູກສັນຫຼັງຂອງເດັກນ້ອຍ ບໍ່ໄດ້ພັດທະນາຢ່າງຖືກຕ້ອງຕັ້ງແຕ່ຢູ່ໃນຄັນຂອງແມ່.

> ກະດູກພ່ອຍ (Osteoporosis) - ອາການຫຼຸ້ຍຫ້ຽນ ຫຼື ບາງລົງຂອງກະດູກ ເຊິ່ງສາມາດເຮັດໃຫ້ທ່ອນກະດູກສັນ ຫຼັງແຕກ.

## ອາການ

> ການໂຄ້ງຂອງຫຼັງຫຼາຍເກີນໄປ

> ອາດກໍ່ໃຫ້ເກີດ: ການເຈັບແອວ, ເຄັ່ງ/ຂໍ້ຕິດ, ສູນເສຍ ຄວາມສູງ, ລຳບາກໃນການຢືນໃຫ້ຊື່, ແລະ ຄວາມອ່ອນເພຍ.

## ການສະໜັບສະໜູນ

> ເດັກນ້ອຍອາດຕ້ອງການການຜ່າຕັດ ເພື່ອ ປັບແລວຂອງກະດູກສັນຫຼັງ ແລະ ປ້ອງກັນຄວາມຜິດປົກກະຕິບໍ່ໃຫ້ພັດທະນາເພີ່ມຂຶ້ນໄປອີກ.

> ສາມາດອອກກຳລັງກາຍສະເພາະທ່າໃດໜຶ່ງ ເພື່ອຊ່ວຍ ຊຸກຍູ້ການປຽດຊື່ຂອງຫຼັງ

> ນອກນັ້ນ ເດັກນ້ອຍກໍຄວນໄດ້ຮັບການຊຸກຍູ້ໃຫ້ນັ່ງ ແລະ ຢືນໃຫ້ຊື່ທີ່ສຸດເທົ່າທີ່ເປັນໄປໄດ້, ພ້ອມທັງ ພະຍາຍາມປຽດບ່າດ້ານຫຼັງໃຫ້ຊື່ພ້ອມ ເພື່ອ ຊ່ວຍຮັກສາແລວຂອງກະດູກໃຫ້ເປັນປົກກະຕິຂຶ້ນ.

> ໃນບາງກໍລະນີ ກໍອາດຮັກສາດ້ວຍການໃຊ້ ເຄື່ອງຄ້ຳ-ສາຍ ຮັດ ແລະ ການເຮັດກາຍະພາບບຳບັດ.

ຄວາມບົກພ່ອງທາງຮ່າງກາຍ

IMPAIRMENTS

# ເສຍອົງຄະ ສ່ວນແຂນ ຫຼື ມື

## PERSON WITH AN AMPUTATED ARM



© Plan International

# ການເສຍອົງຄະ - ສ່ວນແຂນ ຫຼື ມື
## ARM OR HAND AMPUTATION

## ສາເຫດ

ມັນມີໂອກາດໜ້ອຍທີ່ສຸດ ທີ່ເດັກນ້ອຍຈະເກີດມາ ໂດຍບໍ່ມີແຂນ/ມື ຂ້າງໃດຂ້າງໜຶ່ງ ຫຼື ທັງສອງຂ້າງ. ແຕ່ສ່ວນຫຼາຍແລ້ວ, ເດັກນ້ອຍຈະສູນເສຍແຂນ ເນື່ອງຈາກອຸບັດຕິເຫດ ແລະ ການເພີ່ມຂຶ້ນຂອງສົງຄາມ. ໃນກໍລະນີອື່ນໆ, ແຂນ-ຂາ ອາດຈໍາເປັນຕ້ອງຕັດຖ້າຫາກກະດູກມີການຕິດເຊື້ອ ຫຼື ມີເນື້ອງອກ ທີ່ເປັນອັນຕະລາຍ.

## ອາການ

> ສູນເສຍບາງພາກສ່ວນຂອງຮ່າງກາຍ, ອາດສູນເສຍມື ຂ້າງໜຶ່ງ/ມືທັງສອງຂ້າງ ຫຼື ແຂນຂ້າງໜຶ່ງ/ທັງສອງຂ້າງ

> ບໍ່ໄດ້ຈໍາກັດສະເພາະພຽງແຕ່ ຂາ, ແຂນ ຫຼື ນິ້ວ, ແຕ່ຍັງສາມາດເສຍຫູ, ດັງ, ລີ້ນ, ເອິກ ແລະ ອະໄວຍະວະເພດ.

## ການສະໜັບສະໜູນ

> ມັນເປັນສິ່ງທີ່ສໍາຄັນຫຼາຍທີ່ ຕ້ອງຮັກສາ ສ່ວນປາຍຂອງອະໄວຍະວະ ທີ່ຖືກຕັດ ເພື່ອຮັກສາຮູບຊົງໃຫ້ຢູ່ໃນສະພາບດີ ແລະ ຕໍາແໜ່ງ ທີ່ເໝາະສົມ ສໍາລັບການໃສ່ ແຂນ-ຂາທຽມ (ອົງຄະທຽມ).

> ສໍາລັບ ມື ຫຼື ແຂນ ທີ່ຖືກຕັດຄວນນໍາໃຊ້ ເຄື່ອງຊ່ວຍເຫຼືອໃນການຈັບ-ຖື ຫຼື ອຸປະກອນທີ່ດັດປັບ ເພື່ອຊ່ວຍໃນການກິດຈະກໍາປະຈໍາວັນ.

> ອອກກໍາລັງກາຍຢ່າງເປັນປົກກະຕິ ເພື່ອສ້າງຄວາມເຂັ້ມແຂງໃຫ້ກ້າມຊີ້ນ, ເຮັດໃຫ້ຂໍ້ຕໍ່ຊື່ ແລະ ກຽມເນື້ອເຫຍື່ອທີ່ເປັນຮອຍໃຫ້ແຫ້ງດີ ເພື່ອໃຫ້ສາມາດແບກຮັບນໍ້າໜັກຂອງ ອົງຄະທຽມໄດ້.

ຄວາມບົກຜ່ອງທາງຮ່າງກາຍ

IMPAIRMENTS

# ຄົນເສຍອົງຄະ ສ່ວນຂາ ຫຼື ຕີນ

## PERSON WITH AN AMPUTATED LEG



© Plan International

# ການເສຍອົງຄະ - ສ່ວນຂາ ຫຼື ຕີນ
## LEG OR FOOT AMPUTATION

## ສາເຫດ

ມັນມີໂອກາດໜ້ອຍທີ່ສຸດທີ່ເດັກນ້ອຍຈະເກີດມາ ໂດຍບໍ່ມີຂາຂ້າງໃດຂ້າງໜຶ່ງ ຫຼື ທັງສອງຂ້າງ. ແຕ່ສ່ວນຫຼາຍແລ້ວ, ເດັກນ້ອຍຈະສູນເສຍແຂນ ເນື່ອງຈາກອຸບັດຕິເຫດ ແລະ ການເພີ່ມຂຶ້ນຂອງສົງຄາມ. ໃນກໍລະນີອື່ນໆ, ແຂນ-ຂາ ອາດຈຳເປັນຕ້ອງຕັດອອກ ຖ້າຫາກກະດູກມີການຕິດເຊື້ອ ຫຼື ມີ ເນື້ອງອກທີ່ເປັນອັນຕະລາຍ

## ອາການ

> ສູນເສຍບາງພາກສ່ວນຂອງຮ່າງກາຍ, ອາດສູນເສຍຂາຂ້າງໜຶ່ງ/ຂາທັງສອງຂ້າງ ແຕ່ຫົວເຂົ່າລົງມາ, ຫຼື ຂາຂ້າງ ໜຶ່ງ/ຂາ ທັງສອງຂ້າງ ເໜືອຫົວເຂົ່າ.

> ບໍ່ໄດ້ຈຳກັດສະເພາະພຽງແຕ່ ຂາ, ຕີນ ຫຼື ນິ້ວຕີນ,ແຕ່ຍັງສາມາດເສຍຫູ, ດັງ, ລີ້ນ, ເອິກ ແລະ ອະໄວຍະວະເພດ.

## ການສະໜັບສະໜູນ

> ມັນເປັນສິ່ງທີ່ສຳຄັນຫຼາຍທີ່ ຕ້ອງຮັກສາປາຍ ຂອງ ອະໄວຍະວະສ່ວນທີ່ຖືກຕັດ ເພື່ອຮັກສາຮູບຮ່າງໃຫ້ຢູ່ໃນສະພາບດີ ແລະ ຕຳແໜ່ງ ທີ່ເໝາະສົມ ສຳລັບການໃສ່ ແຂນ-ຂາທຽມ/ອົງຄະທຽມ.

> ອອກກຳລັງກາຍຢ່າງເປັນປົກກະຕິ ເພື່ອສ້າງຄວາມເຂັ້ມແຂງໃຫ້ກ້າມຊີ້ນ, ເຮັດໃຫ້ຂໍ້ຕໍ່ຊື່ ແລະ ກຽມເນື້ອເຫຍື່ອທີ່ເປັນຮອຍໃຫ້ແຫ້ງດີ ເພື່ອໃຫ້ສາມາດແບກຮັບນ້ຳໜັກຂອງ ອົງຄະທຽມໄດ້.

ຄວາມພິການທາງຮ່າງກາຍ

IMPAIRMENTS

# ຜູ້ປ່ວຍໂປລິໂອ

PERSON WITH POLIO



© Plan International

# ພະຍາດໂປລິໂອ
## POLIO

## ສາເຫດ

> ພະຍາດໂປລິໂອ ແມ່ນໄວຣັດທີ່ສາມາດທຳລາຍເສັ້ນປະສາດທີ່ເຮັດໜ້າທີ່ຄວບຄຸມການເຄື່ອນໄຫວຂອງ ແຂນ, ລຳໂຕ, ແລະ/ຫຼື ຂາ (ມັນບໍ່ມີຜົນກະທົບຕໍ່ຄວາມຮູ້ສຶກ ຫຼື ຄວາມສາມາດທາງຈິດໃຈ).

## ອາການ

> ຄົນເຈັບສ່ວນໃຫຍ່ທີ່ຕິດເຊື້ອນີ້ ສາມາດເຊົາຈາກພະຍາດນີ້ ໂດຍບໍ່ທັນສັງເກດເຫັນຜົນກະທົບຕ່າງໆເລີຍ
> ຄົນເຈັບບາງຄົນ ອາດມີອາການຖອກທ້ອງ, ອິດເມື່ອຍ, ເປັນໄຂ້ ຫຼື ເປັນໄອເລັກໜ້ອຍ
> ມີພຽງຄົນເຈັບຈຳນວນໜ້ອຍທີ່ເປັນອຳມະພາດ, ເຊິ່ງໃນບາງກໍລະນີກໍຫາຍຂາດທັງໝົດ ຫຼື ຫາຍຂາດພຽງແຕ່ບາງສ່ວນ

## ການສະໜັບສະໜູນ

> ບໍ່ມີການຮັກສາ ສຳລັບ ພະຍາດໂປລິໂອ. ຄົນເຈັບພະຍາດໂປລິໂອສ່ວນໃຫຍ່ ສາມາດຫາຍຂາດ ດ້ວຍການພັກຜ່ອນ ແລະ ກິນອາຫານທີ່ມີໂພສະນາການທີ່ດີ.
> ການຢືດ/ຢຽດຮ່າງກາຍ ໃນຂະນະທີ່ນອນພັກຮັກສາຕົວຢູ່ເທິງຕຽງ ສາມາດຊ່ວຍປ້ອງກັນ ອາການກ້າມຊີ້ນຫົດໂຕ (ການຫົດຕົວສັ້ນລົງຂອງກ້າມຊີ້ນ)

## ການປ້ອງກັນ

> ຊັກຢາວັກຊີນໃນຕອນອາຍຸຍັງນ້ອຍໆ
> ມີສຸຂະອະນາໄມທີ່ດີ

ຄວາມບົກຜ່ອງທາງຮ່າງກາຍ

IMPAIRMENTS

# ຜູ້ພິການ ທາງສະໝອງ

## PERSON WITH CEREBRAL PALSY



© Plan International

# ສະໝອງພິການ
# CEREBRAL PALSY

## ສາເຫດ

> ເນື່ອງຈາກສະໝອງເກີດຄວາມເສຍຫາຍ, ເຊິ່ງເກີດຂຶ້ນກ່ອນໜ້າ, ລະຫວ່າງ ຫຼື ຫຼັງຈາກ ການເກີດ

## ອາການ

> ສະໝອງພິການ ສົ່ງຜົນກະທົບຕໍ່ ທຸກບາດກ້າວຂອງ ພັດທະນາການ ທັງໝົດຂອງເດັກນ້ອຍ, ທັງໃນດ້ານຮ່າງກາຍ ແລະ ຈິດໃຈ.

> ອາການກ້າມຊີ້ນຫົດເກັ່ງ ແມ່ນລັກສະນະທົ່ວໄປຂອງ ການພິການສະໝອງ. ອາການກ້າມຊີ້ນຫົດເກັ່ງ ມັກເຮັດໃຫ້ ສ່ວນຕ່າງໆຂອງຮ່າງກາຍມີອາການ ເຄັ່ງ-ຈ່ອງ ແລະ ການຢືດ-ຄືງ. ມັນເປັນຜົນມາຈາກຄວາມບໍ່ສົມດຸນຂອງ ຮ່າງກາຍ ແລະ ປະຕິກິລິຍາ ຕອບສະໝອງໂດຍບໍ່ໄດ້ຕັ້ງໃຈທີ່ພະຍາມ ແລະ ປ້ອງກັນບໍ່ໃຫ້ໂຕເອງລົ້ມ.

## ການສະໜັບສະໜູນ

> ສະໝອງພິການບໍ່ສາມາດຊ້ອມແຊມ ຫຼື ຮັກສາໃຫ້ຫາຍຂາດໄດ້, ແຕ່ການຫຼິ້ນ ແລະ ການກະຕຸ້ນ ໂດຍພໍ່ແມ່ຂອງເດັກ ແລະ ຜູ້ດູແລ ສາມາດພັດທະນາການເຮັດກິດຈະກຳປະຈຳວັນຂອງເດັກໃຫ້ດີຂຶ້ນໄດ້.

ຄວາມບົກຜ່ອງທາງຮ່າງກາຍ

IMPAIRMENTS

# ຜູ້ປ່ວຍ ພະຍາດຫຼອງ

## PERSON WITH LEPROSY



© Plan International

# ພະຍາດຫູອງ

## LEPROSY

## ສາເຫດ

> ພະຍາດຫູອງ (ຂີ້ທູດ) ແມ່ນພະຍາດທີ່ເກີດຈາກການຕິດເຊື້ອຈາກແບດທີເລຍ ທີ່ສົ່ງຜົນຕໍ່ເສັ້ນປະສາດໃນຜິວໜັງ, ໜ້າ, ມື ແລະ ຕີນ.

> ພະຍາດຫູອງ ສາມາດຕິດຕໍ່ກັນໄດ້ ຖ້າບໍ່ໄດ້ຮັບການຮັກສາ ຫຼື ສາມາດແຜ່ເຊື້ອຜ່ານລະອອງ (ຂອງແຫຼວຂອງຮ່າງກາຍໃນອາກາດ)

## ອາການ

> ຫຼັງຈາກທີ່ຕິດເຊື້ອແລ້ວ, ມັນອາດໃຊ້ເວລາເປັນ ເດືອນ ຫຼື ປີ ກວ່າທີ່ພະຍາດຫູອງຈະແດງສັນຍານທີ່ສາມາດເບິ່ງເຫັນດ້ວຍຕາເປົ່າໄດ້.

> ຮ້ອຍຈ້ຳ-ດ່າງສີຂາວເທິງຜິວໜັງ, ຂາດຄວາມຮູ້ສຶກ; ຕີນ & ມື ອ່ອນແອ; ອາການບວມ/ແຜເປື່ອຍເທິງໃບຫນ້າ.

> ອາການສູນເສຍຄວາມຮູ້ສຶກຕາມບໍລິເວນ ມື ແລະ ຕີນ ສາມາດກໍ່ໃຫ້ເກີດ ບາດແຜ ແລະ ແຜເປື່ອຍ ໃນຂະນະທີ່ກຳລັງເຮັດກິດຈະກຳປະຈຳວັນໄດ້ - ເວລາມີແຜໄຫມ້ເກີດ ຂຶ້ນກໍບໍ່ຮູ້ສຶກ ແລະ ເວລາໃສ່ເກີບທີ່ມີກ້ອນຫີນຢູ່ໃນກໍບໍ່ຮູ້ໂຕວ່າມີກ້ອນຫີນຢູ່.

> ບາດແຜ ແລະ ແຜເປື່ອຍ ສາມາດເຮັດໃຫ້ມີການຕິດ ເຊື້ອ, ການທຳລາຍຜິວໜັງ, ມື, ແລະ ຕີນຢ່າງຖາວອນ, ແລະ ຖ້າຫາກບໍ່ຮັກສາໃຫ້ດີກໍອາດຕ້ອງໄດ້ຕັດອອກ

> ເສັ້ນປະສາດທີ່ຖືກທຳລາຍ ສາມາດນຳໄປສູ່ການສູນເສຍ ລະບົບການເຮັດວຽກຂອງກ້າມຊີ້ນ, ເຊິ່ງນຳໄປສູ່ຄວາມຜິດປົກກະຕິ.

## ການສະໜັບສະໜູນ

> ຖ້າກວດພົບການພະຍາດໃນຕອນຕົ້ນ ແລະ ຮັກສາດ້ວຍຢາສູດຜະສົມໃນໄລຍະຍາວ (Multi-Drug Therapy (MDT) ກໍ່ ສາມາດຢຸດການພັດທະນາຂອງເຊື້ອພະຍາດໄດ້.

> ບາດແຜ ຕ້ອງການການພັກ ແລະ ການຮັກສາສຸຂະອະນາໄມທີ່ດີ ເພື່ອຫຼີກລ້ຽງການຕິດເຊື້ອ.

ຄວາມບົກຜ່ອງທາງຮ່າງກາຍ

IMPAIRMENTS

# ຜູ້ທີ່ມີ ຄວາມຜິດປົກກະຕິ ທາງເອກະດູກສັນຫຼັງ

## PERSON WITH SPINA BIFIDA



© Plan International

# ແອກກະດູກສັນຫຼັງມີຄວາມຜິດປົກກະຕິ
## SPINA BIFIDA

## ສາເຫດ

> ຂໍ້ບົກຜ່ອງທີ່ ເກີດຈາກບັນຫາ ໃນການພັດທະນາໃນໄລຍະທຳອິດ ທີ່ເດັກນ້ອຍຢູ່ໃນຖົງຂອງແມ່.
> ກະດູກສັນຫຼັງ ທີ່ຊ່ວຍປົກປ້ອງໄຂສັນຫຼັງນັ້ນ ບໍ່ກໍ່ຕົວ-ຮວມກັນ ແລະ ບໍ່ປິດແຈບດີຕາມທີ່ມັນຄວນເປັນ.

## ອາການ

> ອາການ ເຊິ່ງສິ່ງຜິນຕໍ່ ກະດູກສັນຫຼັງ ແລະ ປົກກະຕິແລ້ວ ມັກຈະເຫັນໄດ້ຕັ້ງແຕ່ຕອນເກີດ. ບາງຄັ້ງໃນຕອນເກີດ, ກໍອາດມີບາດແຜເປີດຢູ່ຫຼັງ ທີ່ເຫັນໄດ້ຢ່າງຊັດເຈນ.
- ສາມາດເຮັດໃຫ້ເກີດຄວາມພິການທາງຮ່າງກາຍ ແລະ ສະຕິປັນຍາ ຕັ້ງແຕ່ລະດັບເບົາ ຈົນຮອດລະດັບຮຸນແຮງ.
- ສາມາດກໍ່ໃຫ້ເກີດມີບັນຫາ ເຊັ່ນ: ການສູນເສຍ ຄວາມຮູ້ສຶກໃນບໍລິເວນ ຂາ ຫຼື ຕີນ, ການບໍ່ສາມາດ ເຄື່ອນຍ້າຍຂາໄດ້ ແລະ/ຫຼື ບໍ່ສາມາດອົດກັ້ນຍ່ຽວໄດ້.

## ການສະໜັບສະໜູນ

> ການເຮັດກິດຈະກຳທີ່ມີ ການເຄື່ອນໄຫວ-ອອກແຮງ ຂອງ ຮ່າງກາຍ ຢ່າງເປັນປະຈຳແມ່ນມີຄວາມສຳຄັນ, ໂດຍສະເພາະ ສໍາລັບຜູ້ທີ່ການເຄື່ອນໄຫວໄດ້ຮັບຜົນກະທົບ, ເຊັ່ນ: ກະດູກ ສັນຫຼັງເປີດ.
> ການນຳໃຊ້ ລໍ້ເລື່ອນ, ໄມ້ຄໍ້າ, ເຄື່ອງຄໍ້າຊູ ຫຼື ເຄື່ອງຊ່ວຍຍ່າງ ຈະຊ່ວຍຜູ້ທີ່ມີບັນຫາໄຂສັນຫຼັງເສຍຫາຍຂັ້ນຮຸນແຮງ ແລະ ຜູ້ທີ່ບໍ່ສາມາດເຄື່ອນໄຫວ ໃຫ້ສາມາດໄປມາໄດ້ຢ່າງສະດວກ.

## ຄວາມບົກຜ່ອງທາງຮ່າງກາຍ
IMPAIRMENTS

## ຄົນໂຕເຕ້ຍ - ແຈ້
PERSON WITH DWARFISM



© Plan International

# ສະພາວະທີ່ຮ່າງກາຍບໍ່ເຕີບໂຕຕາມປົກກະຕິ (ໂຕເຕ້ຍ - ແຈ້)

## DWARFISM

## ສາເຫດ

- 1 ໃນ 5 ຂອງເດັກນ້ອຍທີ່ມີສະພາວະຮ່າງກາຍບໍ່ເຕີບໂຕຕາມປົກກະຕິ (ເຕ້ຍ-ແຈ້) ແມ່ນເປັນຜົນມາຈາກກຳມະພັນ. ນີ້ແມ່ນຜົນມາຈາກການຜ່າເຫຼົ່າທາງພັນທຸກຳ-ປົນແບບສຸ່ມ ທັງໃນອະສຸຈິ ຂອງພໍ່ ຫຼື ໄຂ່ຂອງແມ່.
- ສາເຫດອື່ນໆທີ່ເຮັດໃຫ້ສະພາວະຂອງຮ່າງກາຍບໍ່ເຕີບໂຕຕາມປົກກະຕິ (ໂຕເຕ້ຍ - ແຈ້) ລວມມີ: ການເຜົາຜານອາຫານ (ການຖ່າຍທອດທາງພັນທຸກຳທີ່ກໍ່ໃຫ້ເກີດບັນຫາ ກ່ຽວກັບປະຕິກິລິຍາຕອບສະໜອງທາງເຄມີໃນຮ່າງກາຍ) ຫຼື ຄວາມຜິດປົກກະຕິ ຂອງໂຮໂມນເຊັ່ນ: ຂາດໂຮໂມນໃນການ ຈະເລີນເຕີບໂຕ (growth hormones) ຫຼື ໂພສະນາການທີ່ບໍ່ດີ.

## ອາການ

- ສິ່ງຜົນເຮັດໃຫ້ຜູ້ໃຫຍ່ ສູງ 4'10 ຟຸດ (147.32 ຊມ) ຫຼື ເຕ້ຍກວ່ານັ້ນ. ຄວາມສູງໂດຍສະເລ່ຍຂອງຜູ້ໃຫຍ່ທີ່ມີສະພາວະຮ່າງກາຍເຕ້ຍ-ແຈ້ ແມ່ນ 4'0 ຟຸດ (121.92 ຊມ), ແຕ່ຄວາມສູງທົ່ວໄປ ແມ່ນຢູ່ລະຫວ່າງ 2'8 ຟຸດ(81.28 ຊມ) ຫາ 4'8 ຟຸດ(142.24ຊມ)
- ແຂນ ແລະ ຂາສັ້ນ ເມື່ອທຽບກັບລຳໂຕ, ແລະ ຫົວມີຂະໜາດໃຫຍ່ບໍ່ສົມສ່ວນ, ໜ້າຜາກໂປ-ປູດ, ແລະ ດັງແມບ.
- ເດັກນ້ອຍມັກມີສັນຫຼັງໂຄ້ງເອ່ນ, ທ້ອງປຸ້ງ -ໂຊຸ່ມ ແລະ ຂາໂຂງ

## ການສະໜັບສະໜູນ

- ຄົນທີ່ມີສະພາວະທີ່ຮ່າງກາຍບໍ່ເຕີບໂຕຕາມປົກກະຕິ (ໂຕເຕ້ຍ - ແຈ້) ສ່ວນໃຫຍ່ ບໍ່ມີຄວາມບົກຜ່ອງດ້ານສະຕິປັນຍາ, ມີອາຍຸຍືນຕາມປົກກະຕິ ແລະ ມີສຸຂະພາບທີ່ດີພໍສົມຄວນ.
- ຄົນທີ່ມີສະພາວະທີ່ຮ່າງກາຍບໍ່ເຕີບໂຕຕາມປົກກະຕິ (ໂຕເຕ້ຍ - ແຈ້) ບາງຄົນ ອາດຕ້ອງການຜ່າຕັດ ຫຼື ການປິ່ນປົວທາງການແພດອື່ນໆ ເພື່ອແກ້ໄຂອາການແຊກຊ້ອນ ແລະ ເພີ່ມການເຄື່ອນໄຫວໃຫ້ໄດ້ຫຼາຍທີ່ສຸດ.

## ໝາຍເຫດ

ການນຳໃຊ້ຄຳວ່າ "ເຕ້ຍ - ແຈ້" ແມ່ນມີຄວາມແຕກຕ່າງກັນໄປຂຶ້ນກັບບຸກຄົນ, ຊຸມຊົນ ແລະ ປະເທດ. ໃນບາງກໍລະນີ, ຄຳນີ້ ອາດຖືເປັນຄຳທີ່ຮຸນແຮງ - ບໍ່ໃຫ້ກຽດ. ດັ່ງນັ້ນ ຄຳສັບ ເຊັ່ນ: ການຈະເລີນເຕີບໂຕຂອງຮ່າງກາຍຖືກຈຳກັດ , ສັດສ່ວນຂອງຮ່າງ ກາຍສັ້ນ, ຄົນໂຕນ້ອຍແມ່ນ ບັນດາຄຳສັບ ທີ່ມັກໃຊ້ແທນ. ວິທີ ການທີ່ດີທີ່ສຸດແມ່ນການເອີ້ນຊື່ຂອງຄົນຜູ້ນັ້ນໂດຍກົງ!

ຄວາມບົກຜ່ອງທາງຮ່າງກາຍ

IMPAIRMENTS

# ຜູ້ທີ່ມີຫົວຂະໜາດໃຫຍ່ກວ່າປົກກະຕິ

## PERSON WITH MACROCEPHALY



© Plan International

# ຫົວທີ່ມີຂະໜາດໃຫຍ່ກວ່າປົກກະຕິ
## MACROCEPHALY

## ສາເຫດ

ສາເຫດທີ່ມັກພົບຫຼາຍທີ່ສຸດ ສໍາລັບ ເດັກນ້ອຍທີ່ມີຂະໜາດ ຫົວໃຫຍ່ກວ່າປົກກະຕິແມ່ນ:

> ສະໝອງທີ່ຂະຫຍາຍໃຫຍ່
> ຫຼືນໍ້າໃນສະໝອງຫຼາຍເກີນໄປ ເຊິ່ງນໍ້າເຫຼົ່າທີ່ຖືກເກັບກັກໃນພາກສ່ວນໃຫຍ່ຂອງສະໝອງຮຽກວ່າ: ໂພງສະໝອງ. ກໍລະນີ ນີ້ອາດເກີດຂຶ້ນຍ້ອນຫຼາຍສາເຫດ ລວມມີ: ກ້ອນຊີດ (cysts) ທີ່ຜິດປົກຕິພາຍໃນສະໝອງ, ການຕິດ ເຊື້ອເຊັ່ນ : ເຫຍື່ອຫຸ້ມສະໝອງອັກເສບ.

## ອາການ

> ອາການທີ່ສັງເກດເຫັນໄດ້ຫຼາຍທີ່ສຸດແມ່ນ: ການມີຂະໜາດຫົວທີ່ໃຫຍ່
> ອາການອື່ນໆສາມາດລວມເຖິງ:
- ຄວາມຊັກຊ້າ ໃນການບັນລຸພັດທະນາການຢູ່ຈຸດສູງສຸດ
- ເຮັດໃຫ້ການຈະເລີນເຕີບໂຕຂອງສ່ວນອື່ນໆຂອງ
- ຮ່າງກາຍຊັກຊ້າ
- ອາການຊັກ

## ການສະໜັບສະໜູນ

ບໍ່ມີການປິ່ນປົວອັນສະເພາະ ສໍາລັບ ຄົນທີ່ມີຫົວຂະໜາດໃຫຍ່ກວ່າປົກກະຕິ (macrocephaly). ການປິ່ນປົວທາງການແພດ ສໍາລັບ ເດັກນ້ອຍທີ່ມີຫົວໃຫຍ່ກວ່າປົກກະຕິແມ່ນ ເນັ້ນໜັກໃສ່ການຮັກສາອາການສະເພາະ ເຊັ່ນ: ພັດທະນາການທີ່ຊັກຊ້າ ແລະ ການປິ່ນປົວຈາກການບົ່ງມັດຕິຂອງ ອາການຂັ້ນຕົ້ນທີ່ເຮັດໃຫ້ເດັກມີຫົວໃຫຍ່ກວ່າປົກກະຕິ.

ຄວາມບົກຜ່ອງທາງຮ່າງກາຍ

IMPAIRMENTS

# ຜູ້ທີ່ມີຫົວຂະໜາດນ້ອຍກວ່າປົກກະຕິ

## PERSON WITH MICROCEPHALY



© Plan International

# ຄົນທີ່ມີຂະໜາດຫົວນ້ອຍກວ່າປົກກະຕິ
## MICROCEPHALY

## ສາເຫດ

ສາເຫດທີ່ເຮັດໃຫ້ເດັກນ້ອຍມີຂະໜາດຫົວນ້ອຍກວ່າ ປົກກະຕິ (microcephaly) ແມ່ນຍັງບໍ່ຮູ້ສາເຫດລະອຽດຄັກແນ່. ບາງສາເຫດທີ່ເປັນທີ່ຮູ້ຈັກແມ່ນ:

> ຄວາມຜິດປົກກະຕິຂອງກຳມະພັນ
> ບັນຫາໃນລະຫວ່າງການຖືພາ ເຊັ່ນ: ການຕິດເຊື້ອ, ການຂາດສານອາຫານ, ການດື່ມເຫຼົ້າ ແລະ ການໃຊ້ຢາເສບຕິດ, ການສະໜອງເລືອດໄປຍັງສະໝອງຂອງ ເດັກນ້ອຍຖືກລົບກວນ.
> ມີການແຜ່ເຊື້ອຂອງ ໄວຣັດ ຊິກາ (Zika) ໄປຍັງແມ່ມານທີ່ຖືພາ ໂດຍຍຸງທີ່ຕິດເຊື້ອ. ເຊື້ອໄວຣັດນີ້ ຈະສົ່ງຕໍ່ຈາກຜູ້ເປັນແມ່ໄປຍັງເດັກນ້ອຍທີ່ຢູ່ໃນຄັນຂອງລາວໃນລະຫວ່າງການຖືພາ, ເຊິ່ງ ໄວຣັດນີ້ ສາມາດເຮັດໃຫ້ຫົວຂອງເດັກນ້ອຍມີຂະໜາດນ້ອຍກວ່າປົກກະຕິ (microcephaly)

## ອາການ

> ອາການຫົວນ້ອຍຜິດປົກກະຕິ (microcephaly) ແມ່ນຄວາມບົກຜ່ອງໃນເວລາເກີດ ເຊິ່ງ ຫົວຂອງເດັກຈະມີຂະໜາດນ້ອຍກວ່າທີ່ຄາດການໄວ້ ເມື່ອປຽບທຽບກັບ ເດັກນ້ອຍຄົນອື່ນໆທີ່ມີເພດ ແລະ ອາຍຸເທົ່າກັນ.
> ເດັກນ້ອຍທີ່ມີຂະໜາດຫົວນ້ອຍກວ່າປົກກະຕິ ມັກມີຂະໜາດສະໝອງທີ່ນ້ອຍກວ່ານຳ, ເຊິ່ງສະໝອງອາດບໍ່ໄດ້ຮັບການພັດທະນາຢ່າງເໝາະສົມ.

## ການສະໜັບສະໜູນ

> ຫົວນ້ອຍກວ່າປົກກະຕິ (Microcephaly) ແມ່ນສະພາບທີ່ຕິດໂຕຕະຫຼອດຊີວິດ. ບໍ່ມີການປິ່ນປົວທີ່ເປັນທີ່ຮູ້ຈັກ ຫຼືການຮັກສາທີ່ເປັນມາດຕະຖານ.
> ເພື່ອປັບປຸງ ແລະ ເພີ່ມຂີດຄວາມສາມາດທາງດ້ານຮ່າງກາຍແລະ ສະຕິປັນຍາຂອງພວກເຂົາ, ການກະຕຸ້ນແຕ່ເບື້ອງຕົ້ນແມ່ນມີຄວາມສຳຄັນ ໃນການສະໜັບສະໜູນ ແລະພັດທະນາການເວົ້າ, ການເຮັດກິດຈະກຳປະຈຳວັນ ແລະການມີສຸຂະພາບທີ່ດີ.

## ຄວາມບົກຜ່ອງທາງຮ່າງກາຍ

**IMPAIRMENTS**

# ຜູ້ທີ່ມີອາການ ດາວຊິນໂດຣມ

## PERSON WITH DOWN SYNDROME



© Plan International

# ກຸ່ມອາການດາວຊິນໂດຣມ
# DOWN SYNDROME

## ສາເຫດ

ດາວຊິນໂດຣມ (Down syndrome) ເກີດມາຈາກການມີໂຄໂມໂຊມທີ່ເກີນມາ, ເຮັດໃຫ້ມີໂຄໂມໂຊມຄູ່ທີ 21 ໃນຈຸລັງຂອງເດັກນ້ອຍ. ໃນກໍລະນີສ່ວນໃຫຍ່, ມັນບໍ່ແມ່ນການຖ່າຍທອດຂອງກຳມະພັນ ແຕ່ເປັນຍ້ອນຄວາມຜິດພາດທາງ ພັນທຸກຳ-ຢີນໃນອະສຸຈິ  ຫຼື ໄຂ່. ຄວາມສ່ຽງໃນການມີລູກທີ່ມີອາການດາວຊິນໂດຣມ (Down syndrome) ຈະສູງຂຶ້ນຕາມອາຍຸຂອງຜູ້ເປັນແມ່.

## ອາການ

- ເດັກນ້ອຍທີ່ມີກຸ່ມອາການດາວຊິນໂດຣມ (Down syndrome) ມັກມີລັກສະນະທາງກາຍະພາບແບບສະເພາະເຊັ່ນ: ດັງນ້ອຍ ແລະ ສັນຂອງດັງແມບ, ລີ້ນມັກເດ່-ຍື່ນອອກມາ, ຄໍສັ້ນ, ມີໜັງສ່ວນເກີນທີ່ດ້ານຫຼັງ, ຫູນ້ອຍ.
- ເດັກນ້ອຍທີ່ມີອາການດາວຊິນໂດຣມ (Down syndrome) ມັກມີພັດທະນາການທາງດ້ານຮ່າງກາຍຊ້າ ກວ່າ ພັດທະນາການຂອງເດັກນ້ອຍທີ່ບໍ່ມີອາການດາວຊິນໂດຣມ.
- ຄວາມບົກຜ່ອງທາງດ້ານສະຕິປັນຍາ, ບັນຫາໃນການຄິດ ແລະ ການຮຽນຮູ້ ແມ່ນ ມັກເກີດກັບເດັກນ້ອຍທີ່ເປັນ ດາວຊິນໂດຣມ ແລະ ປົກກະຕິແມ່ນມີຕັ້ງແຕ່ ລະດັບເບົາ ຈົນເຖິງ ລະດັບກາງ.

## ການສະໜັບສະໜູນ

- ອາການດາວຊິນໂດຣມ (Down syndrome) ບໍ່ມີຢາຮັກສາ, ແຕ່ການກະຕຸ້ນ ສາມາດຊ່ວຍໃນການພັດທະນາຂອງເດັກນ້ອຍໄດ້.
- ສ່ວນຫຼາຍ ເດັກນ້ອຍທີ່ມີອາການດາວຊິນໂດຣມ (Down syndrome) ມັກມີຄວາມສ່ຽງຕໍ່ການມີບັນຫາໃນການໃຊ້ຢາຫຼາຍກວ່າ, ດັ່ງນັ້ນຈຶ່ງຂໍແນະນຳໃຫ້ ນຳເດັກມາກວດສຸຂະພາບກັບທ່ານໝໍເປັນປະຈຳ
- ເດັກນ້ອຍທີ່ມີອາການ ດາວຊິນໂດຣມ (Down syndrome) ສາມາດມີສ່ວນຮ່ວມໃນສັງຄົມໄດ້ຢ່າງເຕັມທີ່ ຖ້າຫາກກິດຈະກຳທີ່ເຮັດນັ້ນໄດ້ຖືກປັບໃຫ້ເໝາະສົມກັບຄວາມສາມາດຂອງພວກເຂົາ.

ຄວາມບົກຜ່ອງທາງຮ່າງກາຍ

IMPAIRMENTS

# ຜູ້ທີ່ມີ ຄວາມພິການ ທາງການໄດ້ຍິນ-ການເບິ່ງເຫັນ

## PERSON WHO IS DEAF-BLIND



© Plan International

# ຄວາມພິການທາງການໄດ້ຍິນ-ການເບິ່ງເຫັນ
## DEAF-BLIND

## ສາເຫດ

> ສາເຫດທີ່ມັກພົບຫຼາຍທີ່ສຸດແມ່ນ ເມື່ອແມ່ມານຕິດເຊື້ອ ຣິບີລາ (Rubella) ໃນລະຫວ່າງກຳລັງຖືພາ ໃນໄລຍະ 3 ເດືອນທຳອິດ.

> ຄວາມພິການທາງດ້ານການໄດ້ຍິນ-ການເບິ່ງເຫັນສາມາດເປັນ ຄວາມພິການທາງການໄດ້ຍິນ-ເບິ່ງເຫັນທີ່ເກີດຕາມຫຼັງ (acquired deaf-blindness), ທີ່ຖືກພັດທະນາຈາກພາຍຫຼັງການເກີດ, ເນື່ອງຈາກ: ປະສົບອຸບັດຕິເຫດ ຫຼືຄວາມເຈັບປ່ວຍ (ມັກມີເຫຍື່ອຫຸ້ມສະໝອງອັກເສບ),ເງື່ອນໄຂ ທາງພັນທຸກຳ ຫຼື ສູງອາຍຸ

## ອາການ

> ອາດບໍ່ໄດ້ມີອາການ ຫູໜວກ ຫຼື ຕາບອດ ທັງໝົດ, ແຕ່ ອາດຍັງສາມາດໄດ້ຍິນ ຫຼື ເບິ່ງເຫັນ ບາງສ່ວນ,  ໃນຂະນະທີ່ບາງຄົນອາດເກືອບສູນເສຍປະສາດສຳພັດທັງສອງຢ່າງໄປ.

> ມີບັນຫາກັບປະສາດສຳພັດຫຼັກທີ່ຊ່ວຍໃນການພັດທະນາການສື່ສານ, ມີການປະຕິສຳພັນກັບຄົນ ອື່ນໆ ແລະ ການຮຽນຮູ້ກ່ຽວກັບສິ່ງທີ່ຢູ່ອ້ອມຂ້າງ.

## ການສະໜັບສະໜູນ

> ນຳໃຊ້ ຄວາມສາມາດໃນການຟັງ ແລະ/ຫຼື ການເບິ່ງເຫັນທີ່ຍັງມີ, ພ້ອມທັງ ນຳໃຊ້ ພາສາມື, ການໃຊ້ນິ້ວສະກົດຄຳ ແລະ/ຫຼື ການນຳໃຊ້ ພາສາເບວ (ໜັງສືນູນສຳລັບຄົນຕາບອດ) ເພື່ອສື່ສານກັນ.

> ຖ້າຫາກສູນເສຍການໄດ້ຍິນ/ການເບິ່ງເຫັນ ຫຼັງຈາກທີ່ໄດ້ຮຽນຕົວອັກສອນປົກກະຕິແລ້ວ, ການຂຽນຕົວອັກສອນ, ຕົວໜັງສື ຫຼື ຄຳສັບລົງໃສ່ຝາມື ກໍສາມາດໃຊ້ເປັນເຄື່ອງມືໃນການສື່ສານໄດ້.

> ການນຳໃຊ້ ໄມ້ນຳທາງ ສາມາດຊ່ວຍໃຫ້ຄົນທີ່ມີຄວາມບົກຜ່ອງປະເພດນີ້ໃຫ້ສາມາດໄປມາເອງໄດ້ ແລະ ເຮັດໃຫ້ພວກເຂົາມີອິດສະລະຫຼາຍຂຶ້ນ.

ຄວາມບົກພ່ອງທາງຮ່າງກາຍ

IMPAIRMENTS

# ຜູ້ທີ່ເປັນ ພະຍາດຄຣີທີນິສຊຶມ

# PERSON WITH CRETINISM



© Plan International

# ພະຍາດຄຣີທີນິສຊຶມ (CRETINISM) - ຄວາມຜິດປົກກະຕິຂອງໂຮໂມນທີ່ເຮັດໃຫ້ການຈະເລີນເຕີບໂຕຂອງຮ່າງກາຍ-ສະຕິປັນຍາມີການພັດທະນາຊ້າ

## ສາເຫດ

> ຄຣີທີນິຊຶມ (Cretinism) ແມ່ນສະພາບຂອງການຈະເລີນເຕີບໂຕ ຂອງຮ່າງກາຍ ແລະ ສະຕິປັນຍາໄດ້ຖືກຢຸດສະງັດຢ່າງຮຸນແຮງ ເນື່ອງຈາກ ບໍ່ມີການຮັກສາ ຕ່ອມໄທຣອຍ (thyroid gland) ທີ່ບໍ່ເຮັດວຽກ ໃນຕອນເກີດ.

> ສາເຫດທີ່ມັກພົບໄດ້ຫຼາຍທີ່ສຸດແມ່ນການຂາດທາດໄອໂອດີນໃນອາຫານທີ່ແມ່ກິນໃນລະຫວ່າງການຖືພາ.

> ໃນຫຼາຍໆແຫ່ງໃນໂລກ, ໂດຍສະເພາະແມ່ນ ຂົງເຂດ ຫຼື ສະຖານທີ່ ເປັນພື້ນທີ່ຮາບສູງ ຫຼື ພູດອຍ ທີ່ມັກມີ ນໍ້າຖ້ວມ ເປັນປະຈໍາ, ເຮັດໃຫ້ ເກືອໃນເຂດນີ້ມີທາດໄອໂອດີນຕໍ່າ ເຊິ່ງ ເຮັດໃຫ້ຕົ້ນໄມ້ ແລະ ສັດມີທາດໄອໂອດີນຕໍ່າ ປະຊາຊົນທີ່ອາ ໄສຢູ່ຂົງເຂດເຫຼົ່ານີ້ ກໍມີຄວາມສ່ຽງຕໍ່ ພະຍາດ ຄຣີທີນິຊຶມ (cretinism).

## ອາການ

> ເຮັດໃຫ້ການຂະຫຍາຍຕົວທາງດ້ານຈິດໃຈ ແລະ ຮ່າງກາຍຊັກຊ້າ

> ການຂະຫຍາຍຂອງ ຕ່ອມໄທຣອຍ (thyroid gland) ເກີດມີອາການ ບວມທີ່ເອີ້ນວ່າ: ຄໍເອີມ (goiter)

> ບາງອາການຂອງ ພະຍາດ (cretinism) ແມ່ນມີຄວາມຄ້າຍຄືກັບ ກຸ່ມອາການ ດາວຊິນໂດຼມ (Down syndrome) ຕົວຢ່າງ: ມີການພັດທະນາທາງດ້ານຈິດໃຈ ສະຕິປັນຍາຊ້າ, ມີການຈະເລີນ ເຕີບໂຕຊ້າຫຼາຍ ແລະ ມີອາຍຸສັ້ນ, ມີຜົມປົ່ງ ຈົມຮອດບໍລິເວນໜ້າຜາກ, ເປືອກຕາບວມ, ດັງແມບ, ເນື້ອທີ່ລະຫວ່າງຕາສອງຂ້າງກວ້າງ ແລະ ມີ ຫນ້າ, ແຂນ ແລະ ຂາບວມ.

## ການສະໜັບສະໜູນ

> ການຮັກສາຕັ້ງແຕ່ຕົ້ນ ແລະ ຢ່າງຕໍ່ເນື່ອງ ດ້ວຍຢາປົວ ໄທລອຍ (thyroid) ສາມາດຊ່ວຍ ປັບປຸງການຈະເລີນເຕີບໂຕ, ລັກສະນະ ທາງກາຍະພາບ, ແລະ ບາງຄັ້ງກໍ່ຊ່ວຍຫຼຸດຜ່ອນ ຫຼື ປ້ອງກັນພັດທະນາ ການທາງດ້ານຈິດໃຈທີ່ຊ້າ.

> ໃນເຂດທີ່ມັກພົບມີອາການຄໍເອີມ, ການສົ່ງເສີມໃຫ້ນໍາໃຊ້ ເກືອໄອໂອດີນ ໃນເວລາແຕ່ງກິນ ສາມາດຊ່ວຍຫຼຸດຜ່ອນ ພະຍາດ ຄຣີທີນິຊຶມ (cretinism)  - ຄວາມບໍ່ສົມປະກອບຂອງໂຮໂມນທີ່ເຮັດ ໃຫ້ການຈະເລີນເຕີບໂຕຂອງຮ່າງກາຍ-ສະຕິປັນຍາມີການພັດທະນາຊ້າ ໄດ້ຢ່າງຫຼວງຫຼາຍ

ຄວາມພິການທາງຮ່າງກາຍ

IMPAIRMENTS

# ຜູ້ທີ່ມີ ຫົວເຂົ່າຜິດຮູບ

## PERSON WITH VALGUS KNEES



© Plan International

# ການຜິດຮູບຂອງຫົວເຂົ່າ - ແບບຫົວເຂົ່າຫັນຈຸກັນ, ແຕ່ຂໍ້ຕີນເດ່ອອກດ້ານນອກ
## VALGUS KNEES

## ສາເຫດ

> ບາງຄັ້ງແມ່ນເກີດຈາກ ຕຳແໜ່ງການພັບຂອງຂາຂອງ ເດັກນ້ອຍ ໃນເວລາທີ່ຢູ່ໃນທ້ອງຂອງແມ່
> ສາມາດພັດທະນາໄດ້ ເຊິ່ງເປັນຜົນມາຈາກບັນຫາທາງການແພດ ຫຼື ພະຍາດ ເຊັ່ນ:
- ການບາດເຈັບຂອງ ກະດູກສັນຫຼັງ (ມີແຕ່ຂາຂ້າງດຽວ ທີ່ມີການຜິດຮູບຂອງຫົວເຂົ່າ-ແບບຫົວເຂົ່າຈຸກັນ, ແຕ່ຂໍ້ຕີນເດ່ອອກດ້ານນອກ (knock-kneed)
- ກະດູກອັກເສບ (ເປັນໜອງ)
- ນ້ຳໜັກເກີນ ຫຼື ເປັນພະຍາດຕຸ້ຍ
- ພະຍາດກະດູກອ່ອນ (ພະຍາດທີ່ ເກີດຈາກການຂາດວິຕາມິນດີ)

## ອາການ

> ຫົວເຂົ່າຈຸກັນ, ແຕ່ຂໍ້ຕີນບໍ່ຈອດກັນ ເຮັດໃຫ້ຂາຫັນເຂົ້າ ດ້ານໃນ
> ນີ້ແມ່ນອາການປົກກະຕິ ຂອງເດັກນ້ອຍ ໃນລະຫວ່າງ ອາຍຸ 2 ປີ ເຖິງ 12 ປີ, ແຕ່ປົກກະຕິແລ້ວ ແຕ່ອາຍຸ 5 ຫຼື 6 ຫົວເຂົ່າຄວນເລີ່ມຢຽດຊື່ໄດ້ແລ້ວ.
> ຫຍຸ້ງຍາກໃນການຍ່າງ (ບໍ່ຄ່ອຍພົບ)
> ຖ້າຫາກປ່ອຍໄວ້ໂດຍບໍ່ຮັກສາ, ອາການຫົວເຂົ່າໂກ່ງເຂົ້າກັນຜິດປົກກະຕິ ສາມາດເຮັດໃຫ້ເກີດພະຍາດຂໍ້ອັກເສບໃນຕອນຕົ້ນ ແລະ/ຫຼື ພື້ນຕີນທີ່ພຽງກັບພື້ນ.

## ການສະໜັບສະໜູນ

> ເຄື່ອງຄ້ຳຊູ - ຫຼາບຂາ ອາດສາມາດຊ່ວຍເຮັດໃຫ້ ຫົວເຂົ່າຢຽດຊື່ ແລະ ຮັກສາບໍ່ໃຫ້ສະພາບຮ້າຍແຮງຫຼາຍກວ່າເກົ່າ. ແຕ່ເຖິງຢ່າງໃດກໍຕາມ, ການນຳໃຊ້ເຄື່ອງຄ້ຳຊູ- ຫຼາບຂາ ກັບເດັກນ້ອຍ ທີ່ອາຍຸເກີນ 6 ຫຼື 7 ປີ ແມ່ນບໍ່ສາມາດຊ່ວຍໄດ້.
> ສ່ວນໃຫຍ່ອາການຫົວເຂົ່າໂກ່ງເຂົ້າກັນຜິດປົກກະຕິ (knock knees) ແມ່ນບໍ່ໄດ້ມີການຮັກສາ, ແຕ່ອາດຈະພິຈາລະນາໃຫ້ມີການມີຜ່າຕັດ ສຳລັບກໍລະນີ ທີ່ຍັງຄົງມີອາການຮຸນແຮງຈົນກາຍໄວເດັກນ້ອຍໄປແລ້ວ.

ຄວາມບົກຜ່ອງທາງຮ່າງກາຍ

IMPAIRMENTS

# ຄົນຂາໂກ່ງ

# PERSON WITH VARUS KNEES



© Plan International

# ການຜິດຮູບຂອງຂໍ້ເຂົ່າ - ແບບຂາໂກ່ງ
## VARUS KNEES

## ສາເຫດ

ເອີ້ນອີກຢ່າງໜຶ່ງວ່າ: ຂາໂກ່ງ (Bow-legs), ການໂກ່ງເຂົ້າຂອງ ຂໍ້ເຂົ່າ (Varus knees) ໄດ້ຖືກພັດທະນາກ່ອນໜ້າທີ່ເດັກນ້ອຍຈະມີອາຍຸ ຄົບ 3 ປີ ເຊິ່ງສາມາດເກີດຈາກຫຼາຍສາເຫດເຊັ່ນ:

> ການພັດທະນາກະດູກທີ່ຜິດປົກກະຕິ
> ຮອຍແຕກທີ່ບໍ່ໄດ້ຖືກຮັກສາຢ່າງຖືກຕ້ອງ
> ສານຕະກົ່ວ ແລະ ສານຟູໂອຣາຍ ທີ່ເປັນພິດ
> ພະຍາດກະດູກອ່ອນ, ເຊິ່ງເກີດຈາກການຂາດ ວິຕາມິນ D

## ອາການ

> ຫົວເຂົ່າບໍ່ຈຸ ຫຼື ບໍ່ຈອດກັນ ໃນເວລາຢືນດ້ວຍສອງຕີນ (ຂໍ້ຂາບໍ່ຈຸກັນ)
> ການໂກ່ງຂອງຂາ ແມ່ນຄ້າຍຄືກັນທັງສອງຂ້າງ (ເທົ່າກັນ)
> ຂາໂກ່ງ ສືບຕໍ່ເກີນອາຍຸ 3 ປີ

## ການສະໜັບສະໜູນ

> ສາມາດລອງ ນໍາໃຊ້ ເກີບທີ່ຜະລິດພິເສດ, ເຄື່ອງຄໍ້າຊູ, ອຸປະກອນເສີມ ຫຼື ເຝືອກ ສໍາລັບອາການຂາໂກ່ງ ໃນກໍລະນີ ທີ່ມີອາການຮຸນແຮງ ຫຼື ເດັກນ້ອຍຍັງມີພະຍາດອື່ນໆນໍາ. ວິທີການເຫຼົ່ານີ້ ຍັງບໍ່ທັນມີຄວາມຊັດ ເຈນວ່າ ຈະໄດ້ຜົນດີແທ້.
> ສາມາດຜ່າຕັດເພື່ອແກ້ໄຂຄວາມຜິດປົກກະຕິຂອງກະດູກທີ່ໂກ່ງ ຢ່າງຮຸນແຮງຂອງເດັກນ້ອຍ.

ຄວາມບົກພ່ອງທາງຮ່າງກາຍ

IMPAIRMENTS

# ຜູ້ທີ່ເປັນພະຍາດລົມບ້າໝູ

## PERSON WITH EPILEPSY



© Plan International

# ພະຍາດລົມບ້າໝູ
# EPILEPSY

## ສາເຫດ

ປະມານເຄິ່ງໜຶ່ງຂອງສາເຫດຂອງພະຍາດລົມບ້າໝູ ແມ່ນ ບໍ່ສາມາດຮູ້ໄດ້. ເຖິງແນວໃດກໍຕາມ, ສາເຫດສາມາດ ເປັນຍ້ອນ:

> ກຳມະພັນ
> ການຕິດເຊື້ອໃນສະໝອງ
> ການບາດເຈັບຢູ່ຫົວ
> ການອຸດຕັນຂອງເສັ້ນເລືອດໄປລ້ຽງສະໝອງ

## ອາການ

ພະຍາດລົມບ້າໝູມີລັກສະນະຊໍາເຮື້ອ, ແລະ ຍັງສາມາດເອີ້ນວ່າ ເປັນອາການຊັກ ຫຼື ອາການຊັກກະຕຸກ. ອາການຊັກ - ກະຕຸກ ແມ່ນ ໄລຍະເວລາທີ່ເກີດອາການໝົດສະຕິ ຫຼື ການປ່ຽນແປງ ທາງສະພາບຈິດໃຈ ຢ່າງກະທັນຫັນ, ປົກກະຕິມັກມາພ້ອມກັບການ ເຄື່ອນໄຫວແບບກະຕຸກ.

## ການສະໜັບສະໜູນ

> ເພື່ອຫຼຸດຜ່ອນ ຫຼື ປ້ອງກັນອາການຊັກ, ການໃຊ້ຢາ ປ້ອງກັນ ການຊັກ-ກະຕຸກແມ່ນສາມາດຊ່ວຍໄດ້.
> ລະຫວ່າງມີອາການຊັກ:
- ຢ່າ ເອົາຫຍັງຍັດໃສ່ປາກຂອງຄົນເຈັບ ໃນເວລາທີ່ ພວກເຂົາເຈົ້າກຳລັງມີອາການຊັກ-ກະຕຸກຢູ່
- ຢ່າ ພະຍາຍາມໄປຄວບຄຸມການເຄື່ອນໄຫວຂອງຄົນເຈັບ
- ຍ້າຍສິ່ງກີດຂວາງອອກໃຫ້ຫ່າງ ເພື່ອບໍ່ໃຫ້ພວກເຂົາເຈົ້າ ຖືກບາດເຈັບ

# ຜູ້ທີ່ເປັນອໍທິສຊຶມ
## PERSON WITH AUTISM



© Plan International

# ອໍທິສຊຶມ (AUTISM)
# ຄວາມຜິດປົກກະຕິໃນການຈະເລີນເຕີບໂຕຂອງສະໝອງ

## ສາເຫດ

> ບໍ່ຮູ້ສາເຫດທັງໝົດ ຂອງ ອໍທິດຕິຊຶມ (Autism)
> ຍີນ ຫຼື ກຳມະກຳ ແມ່ນໜຶ່ງໃນປັດໃຈສ່ຽງທີ່ສາມາດເຮັດໃຫ້ຄົນຜູ້ໜຶ່ງມີແນວໂນ້ມທີ່ຈະພັດທະນາເປັນ ອໍທິດຕິກໄດ້
> ເດັກນ້ອຍທີ່ເກີດຈາກພໍ່ແມ່ທີ່ມີອາຍຸສູງ ຍິ່ງມີຄວາມສ່ຽງຫຼາຍ
> ເດັກນ້ອຍບາງຄົນທີ່ມີຄວາມບົກຜ່ອງດ້ານອື່ນໆ, ໂດຍສະເພາະການໄດ້ຍິນ ຫຼື ຄວາມບົກຜ່ອງທາງດ້ານພັດທະນາການອາດຈະພັດທະນາພຶດຕິກຳອໍທິດຕິຊຶມໄດ້, ຖ້າຫາກ
> ພວກເຂົາເຈົ້າໄດ້ຮັບການກະຕຸ້ນ ແລະ/ຫຼື ຖືກທາລຸນຢ່າງຮຸນແຮງ

## ອາການ

> ອໍທິດຕິຊຶມ ສາມາດສ້າງອຸປະສັກ ໃນການເຂົ້າສັງຄົມ, ການຮັບຮູ້-ເຂົ້າໃຈ ແລະ ພຶດຕິກຳ ແລະ ຄວາມຫຍຸ້ງຍາກ ໃນການສື່ສານ (ສັງຄົມ ແລະ ອາລົມ)
> ມັກບໍ່ສະແດງສັນຍານບົ່ງບອກທາງກາຍະພາບ ຫຼື ບໍ່ມີ
> ຄວາມແຕກຕ່າງຂອງຮູບຮ່າງລັກສະນະພາຍນອກ.
> ພວກເຂົາເຈົ້າອາດມີການສື່ສານ, ການໂຕ້ຕອບ, ພຶດຕິ ກຳ ແລະ ການຮຽນຮູ້ ໃນຮູບແບບທີ່ຕ່າງຈາກຄົນອື່ນໆທົ່ວໄປ, ຕົວຢ່າງ: ຄວາມຫຍຸ້ງຍາກໃນການປະຕິສຳພັນ - ເຊື່ອມ ໂຍງກັບຄົນອື່ນ / ການເຮັດຊໍ້າໄປຊໍ້າມາ.

## ການສະໜັບສະໜູນ

ການບຳບັດຕັ້ງແຕ່ຕອນຕົ້ນສາມາດຊ່ວຍ ປັບປຸງພັດທະນາການໃນການຮຽນຮູ້ ບັນດາທັກສະທີ່ມີຄວາມສຳຄັນໃຫ້ ແກ່ເດັກນ້ອຍ ເຊັ່ນ: ການບຳບັດ ເພື່ອຊ່ວຍເດັກນ້ອຍໃນ ການເວົ້າ, ການຍ່າງ ແລະ ການໂຕ້ຕອບກັບຄົນອື່ນໆ.

ຄວາມບົກຜ່ອງທາງຮ່າງກາຍ

IMPAIRMENTS

# ຄົນຕີນໂງ້ງ

## PERSON WITH CLUBFEET



© Plan International

# ຕີນໂງ້ງ
## CLUBFOOT

## ສາເຫດ

ສາເຫດສ່ວນໃຫຍ່ທີ່ເດັກນ້ອຍເກີດມາມີ ຕີນໂງ້ງ ແມ່ນບໍ່ຮູ້ ສາເຫດ.

## ອາການ

> ຕີນ (ໂດຍສະເພາະສົ້ນຕີນ) ມີຂະໜາດນ້ອຍກວ່າປົກກະຕິ
> ຕີນອາດມີລັກສະນະຊີ້ລົງ
> ທາງດ້ານໜ້າຂອງຕີນອາດ ບິດງໍ ໄປຫາອີກຕີນເບື້ອງໜຶ່ງ

## ການສະໜັບສະໜູນ

> ການປັບ ອາການຕີນໂງ້ງ ທີ່ດີທີ່ສຸດແມ່ນຄວນເລີ່ມປະມານ 2 ມື້ ຫຼັງຈາກທີ່ເດັກນ້ອຍເກີດ ແລະ ສາມາດເຮັດໄດ້ຈົນກວ່າເດັກນ້ອຍຈະອາຍຸຮອດ 4 ປີ.
> 3 ໃນ 5 ຂອງ ອາການຕີນໂງ້ງ ສາມາດປັບໃຫ້ຊື່ກົງໄດ້ ໂດຍທີ່ບໍ່ຈຳເປັນຕ້ອງຜ່າຕັດ ໃນໄລະຍະເວລາ 6-8 ອາທິດ. ຖ້າຫາກທ່ານສາມາດຢຽດຕີນໃຫ້ຊື່ໃນຕຳແໜ່ງ ທີ່ເໝາະສົມໄດ້ຢ່າງງ່າຍດາຍ, ກໍມີຄວາມເປັນໄປໄດ້ວ່າ ກະດູກນັ້ນບໍ່ມີຄວາມຜິດປົກກະຕິ, ແລະ ຕີນຈະປັບສະພາບໄດ້ດ້ວຍຕົວຂອງມັນເອງພຽງແຕ່ອອກກຳລັງກາຍເທົ່ານັ້ນ.
> ການປັບຕຳແໜ່ງຂອງຕີນໃຫ້ຖືກຕ້ອງ ໂດຍການນຳໃຊ້ ວິທີການແບບພົນຊິທິ (Ponseti Method), ເຊິ່ງເປັນເຕັກນິກທີ່ນຳໃຊ້ໃນການປັບຕຳແໜ່ງຂອງຕີນໃຫ້ຖືກຕ້ອງໂດຍບໍ່ຈຳເປັນຕ້ອງຜ່າຕັດ. ບາງຄັ້ງກໍ່ອາດມີການຜ່າຕັດເພີ່ມເຕີມຫາກຈຳເປັນເພື່ອຊ່ວຍປັບຕຳແໜ່ງໃຫ້ຖືກຕ້ອງເປັນຄັ້ງສຸດທ້າຍ.

ຄວາມບົກຜ່ອງທາງຮ່າງກາຍ

IMPAIRMENTS

# ຜູ້ທີ່ເປັນ ພະຍາດໂຕດ່ອນ-ຜິວເຜືອກ

## PERSON WITH ALBINISM



© Plan International

# ພະຍາດໂຕດ່ອນ-ຜິວເຜືອກ
## ALBINISM

## ສາເຫດ

> ພະຍາດໂຕດ່ອນ-ຜິວເຜືອກ ແມ່ນເກີດຈາກຄວາມຜິດປົກກະຕິຂອງກຳມະພັນ ທີ່ເຮັດໃຫ້ຮ່າງກາຍບໍ່ສາມາດຜະລິດ ຫຼື ກະຈາຍເມັດສີເມລານິນ ເຊິ່ງເປັນສານທຳມະຊາດທີ່ສ້າງສີ ໃຫ້ແກ່ຜົມ, ຜິວໜັງ ແລະ ມ່ານຕາ.

> ພະຍາດໂຕດ່ອນ-ຜິວເຜືອກ ແມ່ນການສືບທອດທາງກຳມະພັນ, ດັ່ງນັ້ນ ໂດຍປົກກະຕິແລ້ວມັນຈຶ່ງບໍ່ມີກໍລະນີໃດທີ່ສາມາດປ້ອງກັນໄດ້.

## ອາການ

> ການສູນເສຍຂອງ ສີ ເສັ້ນຜົມ, ຜິວໜັງ ຫຼື ມ່ານຕາ;  ການມີສີຜິວ ແລະ ສີຜົມອອ່ນກວ່າສີປົກກະຕິ ຫຼື ມີສີເປັນ ຈຸດໆ, ຫຼື ການສູນເສຍສີຜິວ

> ບັນຫາໃນການເບິ່ງເຫັນ ເຊິ່ງບໍ່ສາມາດແກ້ໄຂໄດ້ ດ້ວຍການໃສ່ແວ່ນຕາ ເຊັ່ນ: ການແພ້ແສງ

## ການສະໜັບສະໜູນ

> ກະໂຕຂອງ ພະຍາດໂຕດ່ອນ-ຜິວເຜືອກ ບໍ່ຈຳເປັນຕ້ອງການການປິ່ນປົວ, ແຕ່ບັນຫາທີ່ກ່ຽວພັນກັບ ຜິວ ແລະ ຕາແມ່ນຕ້ອງໄດ້ຮັບການປິ່ນປົວ.

> ການປົກປ້ອງ ຜິວໜັງ ແລະ ຕາຈາກແສງຕາເວັນ ແມ່ນມີຄວາມສຳຄັນຫຼາຍ ເຊັ່ນ: ການໃສ່ແວ່ນຕາກັນແດດ ໃນເວລາທີ່ຢູ່ກາງແຈ້ງ ແລະ ຫຼຸດຜ່ອນຄວາມສ່ຽງຕໍ່ການຖືກແດດເຜົາໄໝ້ ໂດຍການຫຼີກລ້ຽງແສງແດດ ໂດຍການໃຊ້ ຄຣີມກັນແດດ, ແລະ ໃສ່ເຄື່ອງນຸ່ງປົກປິດໝົດໂຕ ເມື່ອເວລາຖືກແສງແດດ.

ຄວາມບົກຜ່ອງທາງຮ່າງກາຍ

IMPAIRMENTS

# ຜູ້ທີ່ມີ ບັນຫາທາງຈິດ

## PERSON WITH MENTAL HEALTH PROBLEMS



© Plan International

# ສຸຂະພາບຈິດ
## MENTAL HEALTH

## ສາເຫດ

ບັນຫາສຸຂະພາບຈິດ (ທາງຈິດໃຈ) ແມ່ນ ອຸປະສັກອັນສຳຄັນໃນການມີສ່ວນຮ່ວມໃນສັງຄົມສຳລັບຫຼາຍໆຄົນ. ບັນຫາທາງຈິດສາມາດເປັນຍ້ອນ:

> ກ່ຽວຂ້ອງກັບພັນທຸກຳ
> ຜົນໄດ້ຮັບຈາກປະສົບການທີ່ເຈັບປວດເຊັ່ນ: ການທາລຸນທາງເພດ, ການທາລຸນທາງຮ່າງກາຍ, ຄວາມຮຸນແຮງ, ການສູນເສຍສະມາຊິກໃນຄອບຄົວທີ່ມີຄວາມໃກ້ຊິດ ຫຼື ສົງຄາມ.
> ສະໝອງໄດ້ຮັບຄວາມເສຍຫາຍ-ບາດເຈັບ
> ການເຮັດວຽກທີ່ຜິດປົກກະຕິຂອງຈຸລັງປະສາດໃນສະໝອງ
> ການໃຊ້ເຄື່ອງດື່ມມືນເມົາ ແລະ ຢາ ເປັນເວລາຍາວນານ ແລະຮຸນແຮງ
> ບັນຫາສຸຂະພາບຈິດແມ່ນ ບໍ່ມີສາເຫດມາຈາກ ແມ່ມົດ-ໝໍຜີ, ແລະ ສາມາດອະທິບາຍໄດ້ດ້ວຍເຫດຜົນທາງວິທະຍາສາດ.

## ອາການ

ບັນຫາສຸຂະພາບຈິດ ສາມາດສົ່ງຜົນກະທົບຕໍ່ ອາລົມ, ຄວາມຄິດ ແລະການປະພຶດຂອງຄົນ. ມັນແຕກຕ່າງກັນໄປ ຕາມແຕ່ລະບຸກຄົນ ແລະຄວາມຜິດປົກກະຕິ.

## ການສະໜັບສະໜູນ

> ໂດຍທົ່ວໄປແລ້ວ, ບັນຫາທາງຈິດມັກໄດ້ຮັບການປິ່ນປົວໂດຍການປະສົມປະສານລະຫວ່າງການປິ່ນປົວທາງການແພດ ແລະທາງສັງຄົມ/ພຶດຕິກຳ.
> ສົ່ງຕໍ່ໄປໃຫ້ ໜ່ວຍງານທີ່ໃຫ້ບໍລິການການປິ່ນປົວດ້ານສຸຂະພາບຈິດທີ່ໄດ້ມາດຕະຖານ ຫຼື ຖ້າໃນກໍລະນີບໍ່ມີ ກໍສາມາດສົ່ງຕໍ່ໄປຫາແພດທົ່ວໄປ.
> ຢ່າລະເລີຍ ຫຼື ປ່ອຍໃຫ້ຄົນທີ່ບັນຫາທາງຈິດຢູ່ຄົນດຽວ, ແຕ່ຈົ່ງໃຫ້ຄວາມຮັກ, ການສະໜັບສະໜູນ ແລະ ການຊຸກຍູ້ສົ່ງເສີມແກ່ພວກເຂົາ.

# ຄວາມບົກຜ່ອງທາງຮ່າງກາຍ

## IMPAIRMENTS

# ຜູ້ທີ່ກະດູກສັນຫຼັງຖືກກະທົບ

## PERSON WITH A SPINAL CORD INJURY





© Plan International

# ກະດູກສັນຫຼັງຖືກກະທົບ

## SPINAL CORD INJURY

## ສາເຫດ

ສາເຫດທີ່ເຮັດໃຫ້ ກະດູກສັນຫຼັງຖືກກະທົບມັກເກີດມາຈາກ: ການປະສົບອຸປະຕິເຫດທາງຖະໜົນ, ການລົ້ມ, ການບາດເຈັບຍ້ອນການຫຼິ້ນກິລາ ຫຼື ພະຍາດ.

## ອາການ

ຄວາມເສຍຫາຍ ຫຼື ການບາດເຈັບຂອງກະດູກສັນຫຼັງ ສາມາດສົ່ງຜົນເຮັດໃຫ້ເກີດມີການສູນເສຍ ຫຼື ເກີດ ຄວາມບົກຜ່ອງໃນການເຮັດວຽກຂອງແຂນຂາ ເຊິ່ງຫຼຸດຜ່ອນຄວາມສາມາດ ເຄື່ອນໄຫວ ຫຼື ຄວາມຮູ້ສຶກ.

> ຄວາມເສຍຫາຍຕໍ່ ກະດູກສັນຫຼັງ ຢູ່ ຫຼັງ ຈະສົ່ງຜົນກະທົບຕໍ່ການເຄື່ອນໄຫວ ແລະ ຄວາມຮູ້ສຶກຂອງແຂນ-ຂາ ແລະ ອາດຈະສົ່ງຜົນກະທົບຕໍ່ ບາງສ່ວນຂອງ ກ້າມຊີ້ນບໍລິເວນທ້ອງ.

> ຄວາມເສຍຫາຍຂອງ ໄຂສັນຫຼັງຢູ່ຄໍ ຈະສົ່ງຜົນກະທົບຕໍ່ການເຄື່ອນໄຫວ ແລະ ຄວາມຮູ້ສຶກຂອງແຂນຂາທັງສີ່ສ່ວນ, ເຊັ່ນດຽວກັບກ້າມຊີ້ນໃນບໍລິເວນທ້ອງ ແລະ ໜ້າເອິກ. ນີ້ເອີ້ນວ່າ: ອຳມະພາດສ່ວນລຸ່ມ

> ສາມາດສົ່ງຜົນກະທົບກັບ: ການຫາຍໃຈ, ພົກຍ່ຽວ, ລຳໄສ້, ການເຮັດວຽກທາງເພດ, ການຂັບເຫື່ອ ແລະ ການ ຄວບຄຸມອຸນຫະພູມ

## ການສະໜັບສະໜູນ

> ແຕ່ລະກໍລະນີ ຂອງ ການບາດເຈັບຂອງກະດູກສັນຫຼັງແມ່ນມີເອກະລັກສະເພາະຂອງໃຜມັນ - ຄວນສົ່ງຄົນເຈັບຕໍ່ໃຫ້ສະຖາບັນສະເພາະທາງ ເພື່ອຊ່ວຍຈັດການກັບຄວາມຕ້ອງການຂອງຄົນເຈັບທາງດ້ານການແພດ, ລະບົບການເຮັດວຽກຂອງຮ່າງກາຍ ຫຼື ຄວາມຕ້ອງການທາງດ້ານ ສັງຄົມ.

> ໃຫ້ການສະໜັບສະໜູນທາງດ້ານສັງຄົມ ແກ່ຄົນເຈັບເພື່ອໃຫ້ພວກເຂົາສາມາດຍອມຮັບກັບ ການບາດເຈັບ ແລະ ປັບໂຕ ໃຫ້ເຂົ້າກັບວິຖີຊີວິດອັນໃຫມ່.

ຄວາມບົກຜ່ອງທາງຮ່າງກາຍ

IMPAIRMENTS

# ຜູ້ທີ່ເປັນ ພະຍາດກ້າມຊີ້ນ ອ່ອນເພຍ

## PERSON WITH MUSCULAR DYSTROPHY



© Plan International

# ພະຍາດກ້າມຊີ້ນອ່ອນເພຍ
# MUSCULAR DYSTROPHY

## ສາເຫດ

ໃນຫຼາຍໆກໍລະນີ ພະຍາດກ້າມຊີ້ນອ່ອນເພຍ (MD) ແມ່ນສືບທອດ ພາຍໃນ ຄອບຄົວ. ໂດຍປົກກະຕິມັກຈະຖືກພັດທະນາ ຫຼັງຈາກທີ່ມີ ການສືບທອບ ຢີນທີ່ຜິດປົກກະຕິ ຈາກພໍ່ ຫຼື ແມ່ ຫຼື ຈາກທັງພໍ່-ແມ່.

## ອາການ

> ພະຍາດກ້າມຊີ້ນອ່ອນເພຍ (MD) ແມ່ນ ອາການຂອງກ້າມຊີ້ນທັງໝົດ ຄ່ອຍໆສູນເສຍຄວາມແຂງແຮງ

> ສ່ວນຫຼາຍມັກສິ່ງຜົນກະທົບໃຫ້ແກ່ເດັກນ້ອຍຜູ້ຊາຍ, ເຊິ່ງອາການ ໃນ ຕອນທໍາອິດເກີດຂຶ້ນໃນລະຫວ່າງທີ່ພວກເຂົາເຈົ້າ ມີອາຍຸ 3 ຫາ 5 ປີ



> ເມື່ອອາຍຸໄດ້ 10 ປີ, ເດັກນ້ອຍທີ່ເປັນພະຍາດກ້າມຊີ້ນອ່ອນ ເພຍ (MD) ຈະບໍ່ສາມາດຍ່າງໄດ້. ສິ່ງທີ່ເປັນສັນຍານບົ່ງບອກອັນ ທໍາອິດຂອງພະຍາດນີ້ໃນໂຕຂອງເດັກນ້ອຍແມ່ນ ສັງເກດຈາກ "Gowers sign" (ສັນຍານທາງການແພດທີ່ ບົ່ງບອກຄວາມ ອ່ອນແອຂອງ ກ້າມຊີ້ນ ສ່ວນປາຍຂອງແຂນ-ຂາສ່ວນລຸ່ມ), ສັງເກດ ຈາກວິທີການ ໃນການຢືນທີ່ຕ້ອງໃຊ້ມື ຫຼື ສິ່ງຂອງ ເພື່ອຊ່ວຍຄໍ້າ.

## ການສະໜັບສະໜູນ

> ພະຍາດກ້າມຊີ້ນອ່ອນເພຍ (MD) ບໍ່ຕອບ ສະໜອງຕໍ່ການ ຮັກສາທາງ ການແພດ ແລະ ຄົນຜູ້ທີ່ເປັນພະຍາດນີ້ມັກອາຍຸສັ້ນ.

> ການສະແດງຄວາມສັດຊື່ - ເວົ້າຢ່າງກົງໄປກົງມາກ່ຽວກັບ ພະຍາດ ນີ້ ໃຫ້ກັບເດັກນ້ອຍ ແລະ ພໍ່ແມ່ຂອງເຂົາເຈົ້າຟັງ ແມ່ນເປັນ ສິ່ງທີ່ດີທີ່ສຸດ. ພໍ່ແມ່ ແລະ ເດັກນ້ອຍທີ່ມີພະຍາດກ້າມຊີ້ນອ່ອນ ເພຍ (MD) ນັ້ນຕ້ອງການ ການຊ່ວຍເຫຼືອຢ່າງຕໍ່ເນື່ອງ ເພື່ອຊອກ ຫາວິທີການຮັບມືກັບຄວາມຫຍຸ້ງຍາກໃນການດໍາລົງຊີວິດປະຈໍາ ວັນ.

> ຊ່ວຍໃຫ້ເດັກນ້ອຍປັບຕົວໃຫ້ເຂົ້າກັບ ຂໍ້ຈໍາກັດທີ່ເພີ່ມຂຶ້ນ ແລະ ມີຄວາມ ກະຕືລືລົ້ນ, ມີກໍາລັງໃຈ ແລະ ມີຄວາມສຸກເທົ່າທີ່ຈະ ເປັນໄປໄດ້.

> ເມື່ອກ້າມຊີ້ນໃນການຊົງໂຕອ່ອນເພຍລົງ, ມັນມີຄວາມຈໍາເປັນ ຫຼາຍທີ່ຕ້ອງຮັບປະກັນໃຫ້ໄດ້ວ່າ: ຄົນເຈັບຈະໄດ້ຮັບການຊ່ວຍ ເຫຼືອທີ່ດີໃນ ເວລາທີ່ພວກເຂົາເຈົ້ານັ່ງ/ນອນ.

ຄວາມບົກຜ່ອງທາງຮ່າງກາຍ

IMPAIRMENTS

# ຜູ້ທີ່ເປັນ ພະຍາດຕີນຊ້າງ

## PERSON WITH LYMPHATIC FILARIASIS / ELEPHANTIASIS



© Plan International

# ຜູ້ທີ່ເປັນພະຍາດຕີນຊ້າງ
## LYMPHATIC FILARIASIS / ELEPHANTIASIS

## ສາເຫດ

ພະຍາດ *ແລມພາຕິກ ຟີລາຣິອສິດ* (Lymphatic filariasis) ຫຼື ທີ່ຮູ້ກັນວ່າ: ພະຍາດຕີນຊ້າງ, ເກີດຂຶ້ນຍ້ອນການຕິດເຊື້ອ ຈາກແມ່ທ້ອງໂຕກົມ ຫຼື ແມ່ພະຍາດຟີລາເລຍ, ເຊິ່ງສາມາດແຜ່ເຊື້ອເຂົ້າສູ່ຄົນເຮົາຜ່ານ ໂຕຍຸງ. ຫຼັງຈາກທີ່ຄົນເຮົາ ຖືກຍຸງທີ່ຕິດເຊື້ອກັດແລ້ວ, ແມ່ທ້ອງຊະນິດນີ້ກໍ່ຈະເຂົ້າສູ່ຮ່າງກາຍ ແລະ ເຂົ້າສູ່ທໍ່ນໍ້າເຫຼືອງ ແລະ ຫຼອດເລືອດ ເຮັດໃຫ້ເກີດຄວາມເສຍຫາຍແບບເຊື່ອງຊ້ອນໃນລະບົບ ນໍ້າເຫຼືອງ. ເມື່ອແມ່ທ້ອງ ເຂົ້າໄປອຸດຕັນລະບົບນໍ້າເຫຼືອງ ແລະ ຫຼຸດຜ່ອນການໄຫຼຂອງ ນໍ້າເຫຼືອງ, ຮ່າງກາຍບາງສ່ວນຈະໄຂ່ບວມຂຶ້ນ ແລະ ນີ້ຈຶ່ງເປັນທີ່ມາຂອງການເອີ້ນວ່າ: ແມ່ພະຍາດຕີນຊ້າງ (Lymphedema). ໂດຍປົກກະຕິແລ້ວການຕິດເຊື້ອມັກເກີດຂຶ້ນໃນລະຫວ່າງໄວເດັກ, ແຕ່ພະຍາດຕີນຊ້າງ (ການໄຄ່ບວມ) ຈະພັດທະນາ ແລະ ສະແດງອາການອອກໃນຊ່ວງຊີວິດທີ່ເຫຼືອຂອງຄົນເຮົາ.

## ອາການ

> ພະຍາດຕີນຊ້າງ (Lymphedema): ການສະສົມທາດແຫຼວ\ ແລະ ອາການໄຄ່ບວມຂອງເນື້ອເຫຍື່ອໃນຂາ, ແຂນ, ເອິກ ຫຼື ອະໄວຍະວະເພດຊາຍ (ຂອງແຫຼວໃນຖົງອັນທະຂອງເພດຊາຍມີຫຼາຍເກີນໄປ)

> ອາການເຈັບປວດ ແລະ ການເສຍໂສມ ຈາກພະຍາດນີ້ສາມາດ ນໍາໄປສູ່ ຄວາມພິການຖາວອນ ແລະ ການຖືກຈໍາແນກຈາກສັງຄົມ

## ການສະໜັບສະໜູນ

ຄວາມຮຸນແຮງ ແລະ ການຂະຫຍາຍຕົວຂອງແມ່ພະຍາດສາມາດຫຼຸດຜ່ອນ ແລະ ປ້ອງກັນໄດ້ດ້ວຍວິທີການ ທີ່ງ່າຍດາຍເຊິ່ງລວມມີ: ການມີສຸຂະອະນາໄມທີ່ດີ, ການຮັກ ສາຜິວໜັງ, ການອອກ ກໍາລັງກາຍ ແລະ ການຍົກ-ຫ້ອຍ ແຂນຂາທີ່ໄດ້ຕິດເຊື້ອ. ສິ່ງຈໍາເປັນ ຕະຫຼອດຊີວິດຂອງຜູ້ປ່ວຍທີ່ເປັນພະຍາດຕີນຊ້າງແມ່ນການເຂົ້າ ເຖິງການປິ່ນປົວ.

## ທັດສະນະຄະຕິທີ່ບໍ່ດີ
## NEGATIVE ATTITUDES

# ການຖືກຂົ່ມເຫງ
# BULLYING



© Plan International

## ທັດສະນະຄະຕິທີ່ບໍ່ດີ
## NEGATIVE ATTITUDES

# ການຖືກປ່ອຍໃຫ້ໂດດດ່ຽວ
# ISOLATION



© Plan International

ທັດສະນະຄະຕິທີ່ບໍ່ດີ

NEGATIVE ATTITUDES

# ໝໍຜີ / ໝໍໄສຍະສາດ

## WITCH DOCTOR



© Plan International

# ທັດສະນະຄະຕິທີ່ບໍ່ດີ
## NEGATIVE ATTITUDES

# ການຖືກແບ່ງແຍກໃນຄອບຄົວ
## EXCLUSION IN THE FAMILY



© Plan International

## ທັດສະນະຄະຕິທີ່ບໍ່ດີ

NEGATIVE ATTITUDES

## ການປ່ອຍໃຫ້ເດັກຢູ່ແຕ່ໃນບ້ານ

CHILD KEPT AT HOME



© Plan International

ທັດສະນະຄະຕິທີ່ບໍ່ດີ

NEGATIVE ATTITUDES

# ທັດສະນະຄະຕິ ແບບຕັດສິນ ເໝົາລວມ-ຕາຍໂຕ

STEREOTYPING




© Plan International

## ທັດສະນະຄະຕິທີ່ບໍ່ດີ
NEGATIVE ATTITUDES

# ການປົກປ້ອງຈົນເກີນໄປ
OVERPROTECTIVE



© Plan International

ທັດສະນະຄະຕິທີ່ບໍ່ດີ

NEGATIVE ATTITUDES

# ການຖືກປະຕິເສດ

## REJECTION



© Plan International

ທັດສະນະຄະຕິທີ່ບໍ່ດີ

NEGATIVE ATTITUDES

# ການປົກປ້ອງ-ນຳທາງພໍ່ແມ່ ທີ່ມີຄວາມພິການໄປມາ

## ESCORTING PARENT WITH IMPAIRMENT



© Plan International

ທັດສະນະຄະຕິທີ່ບໍ່ດີ

NEGATIVE ATTITUDES

# ຕຳນານທາງວັດທະນະທຳ

CULTURAL MYTHS



© Plan International

ທັດສະນະຄະຕິທີ່ບໍ່ດີ

NEGATIVE ATTITUDES

# ຄ່າໃຊ້ຈ່າຍສູງ - ແພງ

EXPENSIVE




© Plan International

ທັດສະນະຄະຕິທີ່ບໍ່ດີ

NEGATIVE ATTITUDES

# ຄວາມເຊື່ອ ທາງວັດທະນະທຳ

## CULTURAL BELIEFS...



© Plan International

ທັດສະນະຄະຕິທີ່ບໍ່ດີ

NEGATIVE ATTITUDES

...ຂອງພໍ່

...OF FATHERS



© Plan International

ທັດສະນະຄະຕິທີ່ບໍ່ດີ

**NEGATIVE ATTITUDES**

...ຂອງແມ່

**...OF MOTHERS**



© Plan International

## ທັດສະນະຄະຕິທີ່ບໍ່ດີ

## NEGATIVE ATTITUDES

## ...ຂອງເດັກນ້ອຍ

## ...OF CHILDREN



© Plan International

ທັດສະນະຄະຕິທີ່ບໍ່ດີ

NEGATIVE ATTITUDES

# ພໍ່ແມ່ທີ່ໂສກເສົ້າ

# SAD PARENTS



© Plan International

ທັດສະນະຄະຕິທີ່ບໍ່ດີ

NEGATIVE ATTITUDES

ຕຳນານທາງວັດທະນະທຳ

CULTURAL MYTHS



© Plan International

ທັດສະນະຄະຕິທີ່ດີ

POSITIVE ATTITUDES

# ການຫຼິ້ນດົນຕີ

# MAKING MUSIC



© Plan International

ທັດສະນະຄະຕິທີ່ດີ

POSITIVE ATTITUDES

# ການຟ້ອນລຳ

DANCING



© Plan International

ທັດສະນະຄະຕິທີ່ດີ

POSITIVE ATTITUDES

# ເດັກນ້ອຍທີ່ມີຄວາມສຸກ

# HAPPY CHILDREN



© Plan International

ທັດສະນະຄະຕິທີ່ດີ

POSITIVE ATTITUDES

# ການຫຼິ້ນຮ່ວມກັນ

INCLUSIVE PLAY



© Plan International

## ທັດສະນະຄະຕິທີ່ດີ
**POSITIVE ATTITUDES**

## ໂຮງຮຽນຮ່ວມ
**INCLUSIVE SCHOOL**



© Plan International

ທັດສະນະຄະຕິທີ່ດີ

POSITIVE ATTITUDES

# ຫ້ອງຮຽນແບບຮຽນຮ່ວມ

# INCLUSIVE CLASSROOM



© Plan International

ທັດສະນະຄະຕິທີ່ດີ

POSITIVE ATTITUDES

# ຄອບຄົວທີ່ມີຄວາມສຸກ

# HAPPY FAMILY



© Plan International

ທັດສະນະຄະຕິທີ່ດີ

POSITIVE ATTITUDES

# ການສະໜັບສະໜູນຈາກເພື່ອນມິດ

# PEER SUPPORT



© Plan International

## ທັດສະນະຄະຕິທີ່ດີ

POSITIVE ATTITUDES

## ໂຮງໝໍທີ່ເຂົ້າເຖິງໄດ້

ACCESSIBLE HOSPITAL



© Plan International

ທັດສະນະຄະຕິທີ່ດີ

POSITIVE ATTITUDES

# ກອງປະຊຸມຂອງຊຸມຊົນ

COMMUNITY WORKSHOP




© Plan International

ທັດສະນະຄະຕິທີ່ດີ

POSITIVE ATTITUDES

# ບ່ອນເຮັດວຽກ ທີ່ມີຜູ້ພິການເຮັດວຽກຮ່ວມນຳ

## INCLUSIVE WORKPLACE



© Plan International

ທັດສະນະຄະຕິທີ່ດີ

POSITIVE ATTITUDES

# ການດູແລສຸຂະພາບ ທີ່ລວມເອົາຜູ້ພິການເຂົ້ານຳ

## INCLUSIVE HEALTH CARE



© Plan International

# ການແຕ່ງດອງ

# MARRIAGE



© Plan International

ທັດສະນະຄະຕິທີ່ດີ

POSITIVE ATTITUDES

# ໂບດ (ອິດສະລາມ) ທີ່ເຂົ້າເຖິງໄດ້

## ACCESSIBLE MOSQUE



© Plan International

## ທັດສະນະຄະຕິທີ່ດີ

POSITIVE ATTITUDES

# ໂບດທີ່ເຂົ້າເຖິງໄດ້

ACCESSIBLE CHURCH



© Plan International

ທັດສະນະຄະຕິທີ່ດີ

POSITIVE ATTITUDES

# ພໍ່ແມ່ທີ່ຊ່ວຍສະໜັບສະໜູນ

# PARENT SUPPORT



© Plan International

ທັດສະນະຄະຕິທີ່ດີ

POSITIVE ATTITUDES

# ກຸ່ມການເງິນຈຸລະພາກ ທີ່ທຸກຄົນສາມາດເຂົ້າຮ່ວມ

## INCLUSIVE MICRO FINANCE GROUPS



© Plan International

ທັດສະນະຄະຕິທີ່ດີ

POSITIVE ATTITUDES

# ການເຮັດວຽກຮ່ວມກັນ

COLLECTIVE WORK



© Plan International

# ວັດທີ່ເຂົ້າເຖິງໄດ້

## ACCESSIBLE TEMPLE



© Plan International

ທັກສະ & ອາຊີບ

SKILLS & JOBS

# ຊ່າງປັ້ນເຄື່ອງປັ້ນດິນເຜົາ

# POTTERY



© Plan International

ທັກສະ & ອາຊີບ

SKILLS & JOBS

# ການແຕ່ງກິນກັບແມ່

# COOKING WITH MUM



© Plan International

ທັກສະ & ອາຊີບ

SKILLS & JOBS

# ການແຕ່ງກິນ

# COOKING



© Plan International

ທັກສະ & ອາຊີບ

SKILLS & JOBS

# ການປັດກວາດເຮືອນຊານ

## SWEEPING



© Plan International

ທັກສະ & ອາຊີບ

SKILLS & JOBS

# ການຊັກເຄື່ອງ

# WASHING CLOTHES



© Plan International

ທັກສະ & ອາຊີບ

SKILLS & JOBS

# ການເຮັດນາ-ເຮັດສວນ

# FARMING



© Plan International

ທັກສະ & ອາຊີບ

SKILLS & JOBS

# ການຂໍທານ

## BEGGING

ເມື່ອຂາດໂອກາດທີ່ດີ, ຄົນພິການສ່ວນຫຼາຍຈະຈົບລົງດ້ວຍການຂໍທານຕາມທ້ອງຖະໜົນ. ເຖິງແມ່ນວ່າ, ການຂໍທານຈະເປັນການສ້າງລາຍໄດ້ອີກທາງໜຶ່ງກໍຕາມ, ແຕ່ມັນບໍ່ແມ່ນທັກສະ! ແຕ່ຖ້າວ່າຜູ້ເຂົ້າຮ່ວມໄດ້ກ່າວເຖິງການຂໍທານວ່າເປັນທັກສະໜຶ່ງ, ໃຫ້ເອົາຮູບອອກມາສະແດງໃຫ້ເບິ່ງ ແລະ ອະທິບາຍວ່າ ນີ້ແມ່ນຕົວຢ່າງທີ່ບໍ່ດີ ແລະ ຈະບໍ່ມີໃຜສິ່ງເສີມ.



© Plan International

ທັກສະ & ອາຊີບ

SKILLS & JOBS

# ການຕຳຫູກ

# WEAVING



© Plan International

# ທັກສະ & ອາຊີບ

SKILLS & JOBS

# ຊ່າງຕັດຫຍິບ

TAILORING



© Plan International

ທັກສະ & ອາຊີບ

SKILLS & JOBS

# ຊ່າງແປງລົດ

# MECHANIC



© Plan International

ທັກສະ & ອາຊີບ

SKILLS & JOBS

# ວຽກຫ້ອງການທີ່ໃຊ້ຄອມພິວເຕີ

## COMPUTER WORK



© Plan International

ທັກສະ & ອາຊີບ

SKILLS & JOBS

# ຊ່າງໄມ້

# CARPENTER



© Plan International

ທັກສະ & ອາຊີບ

SKILLS & JOBS

# ຄົນຂາຍເຄື່ອງ

## SALESPERSON



© Plan International

ທັກສະ & ອາຊີບ

SKILLS & JOBS

# ການຈັກສານ

# BASKETWORK



© Plan International

ທັກສະ & ອາຊີບ

SKILLS & JOBS

# ຊ່າງແປງວິທະຍຸ

# RADIO REPAIR



© Plan International

ທັກສະ & ອາຊີບ

SKILLS & JOBS

# ຊ່າງຕັດຜົມ

## BARBER



© Plan International

ທັກສະ & ອາຊີບ

SKILLS & JOBS

# ເຮັດທຸລະກິດຂະໜາດນ້ອຍ

SMALL BUSINESS




© Plan International

ທັກສະ & ອາຊີບ

SKILLS & JOBS

# ຊ່າງເຮັດຂະໜົມ

BAKERY



© Plan International

ທັກສະ & ອາຊີບ

SKILLS & JOBS

# ການປູກຈິດສຳນຶກ ກ່ຽວກັບສິດທິຄົນພິການ

## SELF-ADVOCACY



© Plan International

ອຸປະກອນຊ່ວຍເຫຼືອ

ASSISTIVE DEVICES

# ລໍ້ເລື່ອນ

WHEELCHAIR



© Plan International

# ລໍ້ໂຍກ - ລໍ້ແບບຖີບດ້ວຍມື

## TRICYCLE



© Plan International

ອຸປະກອນຊ່ວຍເຫຼືອ

ASSISTIVE DEVICES

# ໄມ້ຄໍ້າ (ແບບ ກ)

CRUTCH (MODEL A)



© Plan International

# ໄມ້ຄໍ້າ (ແບບ ຂ)

## CRUTCH (MODEL B)



© Plan International

ອຸປະກອນຊ່ວຍເຫຼືອ

ASSISTIVE DEVICES

# ໄມ້ຄ້ຳເທົ້າ

## WALKING STICK



© Plan International

ອຸປະກອນຊ່ວຍເຫຼືອ
ASSISTIVE DEVICES

# ແວ່ນຕາ
GLASSES



© Plan International

ອຸປະກອນຊ່ວຍເຫຼືອ

ASSISTIVE DEVICES

# ໄມ້ນຳທາງ ຂອງຜູ້ພິການຕາ

WHITE CANE



© Plan International

ອຸປະກອນຊ່ວຍເຫຼືອ

ASSISTIVE DEVICES

# ຂາທຽມ

# LEG PROSTHESIS



© Plan International

ອຸປະກອນຊ່ວຍເຫຼືອ

ASSISTIVE DEVICES

# ເຄື່ອງຄ້ຳຂູຂາ (ຫຼາບຂາ)

## LEG BRACE



© Plan International

ອຸປະກອນຊ່ວຍເຫຼືອ

ASSISTIVE DEVICES

# ເຄື່ອງຊ່ວຍຟັງ

# HEARING AID



© Plan International

ອຸປະກອນຊ່ວຍເຫຼືອ

ASSISTIVE DEVICES

# ອຸປະກອນຊ່ວຍຍ່າງ

## WALKER



© Plan International

ອຸປະກອນຊ່ວຍເຫຼືອ
ASSISTIVE DEVICES

# ແຂນທຽມ
# ARM PROSTHESIS



© Plan International

ອຸປະກອນຊ່ວຍເຫຼືອ

ASSISTIVE DEVICES

ການຟື້ນຟູ

REHABILITATION



© Plan International